ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ແລະ ບໍລິສັດໃນເຄືອ



ເອກະສານລາຍງານການເງິນສັງລວມກິດຈະການ

31 ທັນວາ 2020

www.pwc.com/la

ສາລະບານ **ໜ້າ**

ບົດລາຍງານຂອງຜູ້ກວດສອບອິດສະຫຼະ	1 - 5
ໃບລາຍງານຖານະການເງິນສັງລວມກິດຈະການ	6 - 7
ໃບລາຍງານຜົນໄດ້ຮັບສັງລວມກິດຈະການ	8
ໃບລາຍງານສ່ວນປ່ຽນແປງທຶນສັງລວມກິດຈະການ	9
ໃບລາຍງານກະແສເງິນສົດສັງລວມກິດຈະການ	10 - 11
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສັງລວມກິດຈະການ	12 - 34

ບົດລາຍງານຂອງຜູ້ກວດສອບອິດສະຫຼະ

ເຖິງ: ສະພາຜູ້ອຳນວຍການ ແລະ ຜູ້ຖືຮຸ້ນ ຂອງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ຄຳເຫັນຂອງພວກເຮົາ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນຂອງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ບໍລິສັດ) ແລະ ບໍລິສັດໃນເຄືອ (ກຸ່ມບໍລິສັດ) ວັນທີ 31 ທັນວາ 2020 ໄດ້ຖືກສ້າງຂຶ້ນຢ່າງຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ເຊິ່ງອະທິບາຍໃນບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານສະບັບນີ້.

ການກວດສອບຂອງພວກເຮົາມີດັ່ງນີ້:

ເອກະສານລາຍງານການເງິນສັງລວມກິດຈະການ ປະກອບດ້ວຍ:

- ໃບລາຍງານຖານະການເງິນສັງລວມກິດຈະການ ວັນທີ 31 ທັນວາ 2020
- ໃບລາຍງານຜົນໄດ້ຮັບສັງລວມກິດຈະການສຳລັບທ້າຍປີ
- ໃບລາຍງານສ່ວນປ່ຽນແປງທຶນສັງລວມກິດຈະການສຳລັບທ້າຍປີ
- ໃບລາຍງານກະແສເງິນສົດສັງລວມກິດຈະການສຳລັບທ້າຍປີ ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ, ເຊິ່ງສັງລວມນະໂຍບາຍການບັນຊີທີ່ສຳຄັນ.

ພື້ນຖານໃນການອອກຄຳເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ ມາດຕະຖານການກວດສອບສາກົນໄດ້ລະບຸໄວ້ໃນວັກ ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນສັງລວມ ກິດຈະການ ຂອງບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫລັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄຳເຫັນຂອງພວກເຮົາ.

ຄວາມເປັນອິດສະຫຼະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກບໍລິສັດ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນ ອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ນານາຊາດ ສຳລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມ ຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

ຂໍ້ມູນ ແລະ ເຫດການທີ່ເນັ້ນ - ພື້ນຖານ ການບັນຊີ

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການກະກຽມ ເອກະສານລາຍງານການເງິນ. ພື້ນຖານການບັນຊີທີ່ຖືກນຳໃຊ້ໃນການກະກຽມບົດລາຍງານການເງິນສະບັບນີ້ ອາດມີຄວາມແຕກຕ່າງກັບ ຈາກ ຫຼັກການບັນຊີ ມາດຕະຖານການລາຍງານການເງິນສາກົນ ("IFRS"). ດັ່ງນັ້ນ, ຜູ້ທີ່ນຳໃຊ້ ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການ ເງິນນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດຕາມ IFRS. ທັ້ງນີ້ຄວາມເຫັນ ຂອງພວກ ເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນັ້ນ.

pwc

ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບ ແມ່ນ ເລື່ອງຕ່າງໆ ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນສັງລວມກິດຈະການສຳລັບປີປັດຈຸບັນ. ພວກເຮົາໄດ້ນຳເນື້ອໃນສຳຄັນເຫຼົ່ານີ້ມາລວມໃນການກວດສອບເອກະສານລາຍງານການເງິນສັງລວມກິດຈະການ ເພື່ອສະແດງຄຳເຫັນຂອງພວກເຮົາ ພ້ອມນີ້ພວກເຮົາບໍ່ໄດ້ສະແດງຄຳເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບ
ການຮັບຮູ້ລາຍຮັບຂອງການຂາຍຍົກ ອີງຕາມບົດອະທິບາຍຂໍ້ 2.14 "ນະໂຍບາຍການບັນຊີ - ການຮັບຮູ້ລາຍຮັບ" ແລະ ບົດອະທິບາຍຂໍ້ 19 "ລາຍຮັບ" ໃນເອກະສານລາຍງານການເງິນສັງລວມກິດຈະການ. ລາຍຮັບຂອງ ກຸ່ມບໍລິສັດ ປະກອບດ້ວຍ ລາຍຮັບຈາກ ການຂາຍຍົກ ແລະ ຂາຍຍ່ອຍ ນ້ຳມັນເຊື້ອໄຟ ແລະ ນ້ຳມັນເຄື່ອງ ເຊິ່ງຂາຍຍົກເປັນສ່ວນໃຫຍ່. ໄລຍະເວລາທີ່ແຕກຕ່າງ ແລະ ເງື່ອນໄຂການຂາຍຍົກຂອງ ກຸ່ມບໍລິສັດ ແມ່ນມີຜົນກະທົບທາງກົງ ຕໍ່ຄວາມຖືກຕ້ອງຂອງການບັນທຶກລາຍຮັບ. ໄລຍະເວລາໃນຂະບວນການອອກຮຽກໃບເກັບເງິນ ແລະ ຂະບວນການຂົນສົ່ງ ອາດເຮັດໃຫ້ເກີດຄວາມສ່ຽງສູງໃນຄວາມຄົບຖ້ວນ ແລະ ສະສາງບັນຊີ ໂດຍສະເພາະ ລາຍຮັບຈາກການຂາຍຍົກນ້ຳມັນ ເຊິ່ງມີການບັນທຶກລາຍຮັບແຕກຕ່າງຈາກໄລຍະເວລາຂອງການສົ່ງມອບ ເຊິ່ງມີຜົນກະທົບຕໍ່ການຮັບຮູ້ລາຍຮັບໃຫ້ຖືກຕາມປີການບັນຊີ. ພວກເຮົາໃຫ້ຄວາມສຳຄັນໃນເລື່ອງນີ້ ອັນເນື່ອງມາຈາກຮອບວຽນການອອກໃບຮຽກເກັບເງິນທີ່ອາດຈະບໍ່ກົງກັບມື້ປິດບັນຊີທ້າຍປີສະເໝີໄປ ດັ່ງນັ້ນການຮັບຮູ້ລາຍຮັບຈຶ່ງຕ້ອງອີງຕາມການປະເມີນຂອງ ຜູ້ບໍລິຫານ.	ພວກເຮົາປະຕິບັດຕາມຂັ້ນຕອນການກວດສອບດັ່ງຕໍ່ໄປນີ້: • ປະເມີນ ແລະ ກວດກາ ລະບົບການຄວບຄຸມ ທີ່ກ່ຽວຂ້ອງ ສຳລັບຂັ້ນຕອນ ການຮັບຮູ້ລາຍຮັບ. ເພື່ອໃຫ້ໄດ້ຄວາມໝັ້ນໃຈວ່າ ການອອກໃບບິນ ແລະ ລະບົບການເຮັດວຽກຕ່າງໆມີຄວາມໜ້າເຊື່ອຖື ແລະ ການປ່ຽນແປງລະບົບການຄວບຄຸມ ແມ່ນສອດຄ່ອງກັບລະບົບທີ່ກ່ຽວຂ້ອງ. • ກວດກາໃບຮຽກເກັບເງິນຂອງລູກຄ້າລາຍບຸກຄົນ ແລະ ບໍລິສັດ ທຽບໃສ່ການອະນຸມັດ ແລະ ກວດກາກ່ອນທີ່ຈະບັນທຶກໃນບັນຊີແຍກປະເພດທົ່ວໄປ ແລະ ໃບຮັບເງິນສົດ. • ກວດກາກຸ່ມຕົວຢ່າງການກະທົບຍອດລະຫວ່າງ ບົດລາຍງານສັງລວມລາຍຮັບ ແລະ ບັນຊີໃຫຍ່ແຍກປະເພດ ເຊິ່ງລວມເຖິງ ການກວດສອບຂັ້ນຕອນການບັນທຶກລາຍການປັບປຸງ ໂດຍການສົມທຽບກັບເອກະສານທີ່ກ່ຽວຂ້ອງຂອງລາຍຮັບ. • ກວດກາລາຍລະອຽດຂອງການສະສາງລາຍຮັບໂດຍເລືອກກຸ່ມຕົວຢ່າງ ກ່ອນ ແລະ ຫຼັງ ປີປິດບັນຊີ ເພື່ອກວດກາວ່າລາຍການດັ່ງກ່າວຖືກບັນທຶກຢ່າງຄົບຖ້ວນໃນເວລາທີ່ເໝາະສົມ ຕາມຂໍ້ກຳນົດ ແລະ ເງື່ອນໄຂທີ່ກຳນົດໄວ້ໃນໃບແຈ້ງໜີ້ ແລະ ເອກະສານການສົ່ງມອບ. • ກວດກາກຸ່ມຕົວຢ່າງລາຍການບັນທຶກບັນຊີ ຂອງລາຍຮັບແຕ່ລະປະເພດ ທີ່ເກີດຂຶ້ນພາຍໃນປີ ໂດຍການສົມທຽບລາຍການບັນທຶກບັນຊີກັບໃບຮຽກເກັບເງິນ ແລະ ເອກະສານທີ່ກ່ຽວຂ້ອງຕ່າງໆ. ຈາກຜົນຂອງການກວດສອບເຫຼົ່ານີ້ ພວກເຮົາພົບວ່າ ການປະເມີນຂອງຜູ້ບໍລິຫານ ສຳລັບການຮັບຮູ້ລາຍຮັບ ແມ່ນໄດ້ບັນທຶກບັນຊີຢ່າງເໝາະສົມ, ສອດຄ່ອງກັບນະໂຍບາຍການບັນຊີ ແລະ ເອກະສານທີ່ມີ.

ຂໍ້ມູນອື່ນ

ຜູ້ອຳນວຍການມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນເຊິ່ງປະກອບມີ ຂໍ້ມູນລວມຢູ່ໃນເອກະສານລາຍງານການເງິນປະຈຳປີ ແຕ່ບໍ່ລວມເຖິງເອກະສານ ລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບທີ່ຢູ່ໃນເອກະສານລາຍງານນັ້ນ. ພວກເຮົາຄາດວ່າຈະໄດ້ຮັບເອກະສານ ລາຍງານການເງິນ ປະຈຳປີ ພາຍຫຼັງວັນທີຂອງບົດລາຍງານຂອງຜູ້ກວດສອບ.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນບໍ່ຄອບຄຸມເຖິງຂໍ້ມູນອື່ນ ແລະ ພວກເຮົາບໍ່ໄດ້ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນເຫຼົ່ານັ້ນ.

ເພື່ອໃຫ້ສອດຄ່ອງກັບການກວດສອບ ຂອງພວກເຮົາຕໍ່ກັບເອກະສານລາຍງານການເງິນສັງລວມກິດຈະການ, ຄວາມຮັບຜິດຊອບຂອງພວກເຮົາ ທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນ ຄືການອ່ານ ແລະ ພິຈາລະນາວ່າຂໍ້ມູນອື່ນມີຄວາມຂັດແຍ່ງທີ່ເປັນສາລະສຳຄັນ ກັບ ເອກະສານລາຍງານການເງິນ ຫຼື ກັບຄວາມຮູ້ທີ່ໄດ້ຮັບຈາກການກວດສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມ ເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່.

ໂດຍອີງຕາມການທົດສອບ ຂອງພວກເຮົາ, ຫາກພວກເຮົາພົບວ່າມີການສະແດງຂໍ້ມູນທີ່ຜິດຕໍ່ຄວາມເປັນຈິງໃນບົດລາຍງານປະຈຳປີ. ພວກເຮົາ ຕ້ອງໄດ້ແຈ້ງໃຫ້ຄະນະກຳມະການກວດສອບ ແລະ ຜູ້ບໍລິຫານຮັບຊາບເພື່ອດັດແກ້ ແລະ ເຜີຍແຜ່ບົດລາຍງານອີກເທື່ອໜຶ່ງ.

ຄວາມຮັບຜິດຊອບຂອງສະພາ ຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນສັງລວມກິດຈະການ

ຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນສັງລວມກິດຈະການ ໂດຍສອດຄ່ອງກັບ ນະໂຍບາຍ ການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນສັງລວມກິດຈະການ ນີ້ ແລະ ການ ຄວບຄຸມພາຍໃນ ເຊິ່ງຜູ້ອຳນວຍການໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນສັງລວມກິດຈະການ ທີ່ປາສະຈາກການ ລາຍງານບໍ່ຖືກຕ້ອງອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນສັງລວມກິດຈະການ, ຜູ້ອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດ ຂອງ ກຸ່ມບໍລິສັດ ໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການ ໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບ ກິດຈະການ ຫຼື ບໍ່ສາມາດດຳເນີນງານ ຢ່າງຕໍ່ເນື່ອງໄດ້.

ຄະນະຜູ້ບໍລິຫານ ໄດ້ຊ່ວຍຜູ້ອຳນວຍການ ໃນເລື່ອງຄວາມຮັບຜິດຊອບ ຂອງພວກເຂົາຕໍ່ກັບຂັ້ນຕອນໃນການກຽມ ບົດລາຍງານການເງິນ ສັງລວມກິດຈະການ.

ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນສັງລວມກິດຈະການ

ວັດຖຸປະສົງ ຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນສັງລວມກິດຈະການ ປາສະຈາກ ການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ. ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄຳເຫັນຂອງພວກເຮົາຕໍ່ເອກະສານ ລາຍງານການເງິນສັງລວມກິດຈະການ ເຊິ່ງລວມທັ້ງການອອກຄຳເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອ ໝັ້ນໃນລະດັບສູງເຊິ່ງບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດ ພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ. ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ພິຈາລະນາວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍ ການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນສັງລວມກິດຈະການ ເຫຼົ່ານີ້.

ໃບລາຍງານຖານະການເງິນສັງລວມກິດຈະການ
ໃນວັນທີ 31 ທັນວາ 2020

	ບິດ ອະທິບາຍ	2020 ກີບ	2019 ດັດແກ້ ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	5	5,972,282,724	7,436,128,462
ໜີ້ຕ້ອງຮັບທາງການຄ້າ, ສຸດທິ	6	116,034,897,876	124,854,782,269
ສິນຄ້າໃນສາງ-ສຸດທິ	7	24,330,263,991	24,695,863,078
ເງິນໃຫ້ພາກສ່ວນທີ່ກ່ຽວຂ້ອງ ກູ້ຢືມໄລຍະສັ້ນ	24.5	39,538,507,710	34,433,275,626
ຊັບສິນໝຸນວຽນອື່ນໆ	8	130,475,900,447	94,485,911,699
ລວມຊັບສິນໝຸນວຽນທັງໝົດ		**316,351,852,748**	**285,905,961,134**
ຊັບສິນບໍ່ໝຸນວຽນ			
ຊັບສົມບັດຖິ່ງທີ່ມີຕົວຕົນ, ສຸດທິ	9	317,103,566,523	327,777,992,137
ຊັບສົມບັດຖິ່ງທີ່ທີ່ບໍ່ມີຕົວຕົນ, ສຸດທິ	10	5,173,795,545	6,258,728,410
ຊັບສົມບັດຖິ່ງທີ່ເພື່ອການລົງທຶນ, ສຸດທິ	11	84,474,039,871	86,509,152,307
ຊັບສິນບໍ່ໝຸນວຽນອື່ນໆ	12	58,053,667,095	46,916,366,910
ລວມຊັບສິນບໍ່ໝຸນວຽນທັງໝົດ		**464,805,069,034**	**467,462,239,764**
ລວມຊັບສິນທັງໝົດ		**781,156,921,782**	**753,368,200,898**

ທ່ານ ຈັນທອນ ສິດທິໄຊ
ຜູ້ອຳນວຍການໃຫຍ່

ວັນທີ: 29 ເມສາ 2021

ທ່ານ ນາງ ຈັນທະດອນ ເພກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ເມສາ 2021

ໃບລາຍງານຖານະການເງິນສັງລວມກິດຈະການ
ໃນວັນທີ 31 ທັນວາ 2020

	ບົດ ອະທິບາຍ	2020 ກີບ	2019 ດັດແກ້ ກີບ
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສິ່ງທາງການຄ້າ	13	82,421,760,886	116,317,493,425
ໜີ້ຕ້ອງສິ່ງອາກອນ	14	17,553,668,359	16,605,309,860
ເງິນກູ້ຢືມໄລຍະສັ້ນ	15	67,706,597,421	34,700,000,000
ໜີ້ສິນໝຸນວຽນອື່ນໆ	16	36,932,327,169	26,912,463,758
ລວມໜີ້ສິນໝຸນວຽນທັງໝົດ		**204,614,353,835**	**194,535,267,043**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	15	366,396,420,000	326,255,600,000
ລວມໜີ້ສິນບໍ່ໝຸນວຽນທັງໝົດ		**366,396,420,000**	**326,255,600,000**
ລວມໜີ້ສິນທັງໝົດ		**571,010,773,835**	**520,790,867,043**
ທຶນ			
ທຶນຈົດທະບຽນທີ່ຖອກແລ້ວ	17	470,000,000,000	470,000,000,000
ສ່ວນເພີ່ມມູນຄ່າຮຸ້ນ	17	27,638,932,340	27,638,932,340
ສຳຮອງການຄວບຄຸມຮ່ວມ		-	(898,908,935)
ຂາດທຶນສະສົມ			
ຈັດສັນ - ສຳຮອງຕາມລະບຽບການ	18	5,292,232,229	4,172,052,092
ສຳຮອງອື່ນໆ		1,977,267,979	1,977,267,979
ຂາດທຶນສະສົມ		(296,854,914,742)	(272,300,958,170)
ທຶນ ຄວາມເປັນເຈົ້າຂອງ ຂອງບໍລິສັດແມ່		**208,053,517,806**	**230,588,385,306**
ຜູ້ຖືຮຸ້ນສ່ວນນ້ອຍ		2,092,630,141	1,988,948,549
ລວມທຶນ		**210,146,147,947**	**232,577,333,855**
ລວມໜີ້ສິນ ແລະ ທຶນ		**781,156,921,782**	**753,368,200,898**

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ທ່ານ ຈັນທອນ ສິດທິໄຊ
ຜູ້ອຳນວຍການໃຫຍ່

ວັນທີ: 29 ເມສາ 2021

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ເມສາ 2021

ໃບລາຍງານຜົນໄດ້ຮັບສັງລວມກິດຈະການ
ສຳລັບທ້າຍປີ ສິ້ນສຸດໃນວັນທີ 31 ທັນວາ 2020

	ບິດ ອະທິບາຍ	2020 ກີບ	2019 ດັດແກ້ ກີບ
ລາຍຮັບ	19	1,129,053,574,486	1,271,935,934,055
ຕົ້ນທຶນຂາຍ	21	(1,045,295,168,102)	(1,191,165,594,523)
ກຳໄລເບື້ອງຕົ້ນ		**83,758,406,384**	**80,770,339,532**
ລາຍຮັບອື່ນໆ	20	17,222,545,168	6,443,866,820
ກຳໄລ (ຂາດທຶນ) ອື່ນໆ-ສຸດທິ		1,617,661,352	(28,188,873,733)
ລາຍຈ່າຍໃນການຂາຍ	21	(21,815,903,744)	(21,989,410,267)
ລາຍຈ່າຍບໍລິຫານ	21	(65,224,469,710)	(86,731,055,712)
ກຳໄລ (ຂາດທຶນ) ຈາກການດຳເນີນງານ		**15,558,239,450**	**(49,695,133,360)**
ລາຍຈ່າຍທາງການເງິນ		(34,810,350,996)	(29,106,991,445)
ຂາດທຶນສຸດທິ ກ່ອນຫັກລາຍຈ່າຍອາກອນກຳໄລ		**(19,252,111,546)**	**(78,802,124,805)**
ອາກອນກຳໄລ	22	(3,179,074,362)	(1,435,841,860)
ຂາດທຶນໃນປີສຸດທິ		**(22,431,185,908)**	**(80,237,966,665)**
ຂາດທຶນ ທີ່ເປັນສ່ວນຂອງ			
ບໍລິສັດ ແມ່		(22,534,867,500)	(80,282,505,228)
ຜູ້ຖືຮຸ້ນສ່ວນນ້ອຍ		103,681,592	44,538,563
		(22,431,185,908)	**(80,237,966,665)**
ກຳໄລ (ຂາດທຶນ) ຕໍ່ຮຸ້ນ			
ກຳໄລ(ຂາດທຶນ)ສຸດທິ(ຂາດທຶນ) ຕໍ່ຮຸ້ນ	23	(96)	(342)

ບໍລິສັດ ປິໂຕຣລັ້ມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ທ່ານ ຈັນທອນ ສີດທິໄຊ
ຜູ້ອຳນວຍການໃຫຍ່

ວັນທີ: 29 ເມສາ 2021

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ເມສາ 2021

	ທຶນຈົດທະບຽນ (ປົດອະທິບາຍທີ 17) ກີບ	ສ່ວນເພີ່ມມູນຄ່າຮຸ້ນ (ປົດອະທິບາຍທີ 17) ກີບ	ສຳຮອງການຄວບຄຸມຮ່ວມ ກີບ	ສ່ວນຕ່າງຈາກການແປງຄ່າ ກີບ	ຂາດທຶນສະສົມ ຈັດສັນສຳຮອງຕາມລະບຽບການ ກີບ	ຂາດທຶນສະສົມ ສຳຮອງອື່ນໆ ກີບ	ຂາດທຶນສະສົມ ດັດແກ້ (ປົດອະທິບາຍທີ 3) ກີບ	ເງິນລົງທຶນທີ່ ບໍ່ໃຫ້ສິດຄວບຄຸມ ກີບ	ລວມ ກີບ
ຍອດຍົກມາ ໃນວັນທີ 1 ມັງກອນ 2019									
ລາຍການປັບປຸງບັນຊີອື່ນ ຈາກການປ່ຽນແປງນະໂຍບາຍການບັນຊີ	470,000,000,000	27,638,932,340	(898,908,935)	544,522,558	3,708,530,711	1,977,267,979	(192,505,936,248)	2,027,020,407	312,491,428,812
ຍອດຍົກມາ ໃນວັນທີ 1 ມັງກອນ 2019 (ດັດແກ້)	-	-	-		-	-	951,004,687	(459,145)	950,545,542
	470,000,000,000	**27,638,932,340**	**(898,908,935)**	**544,522,558**	**3,708,530,711**	**1,977,267,979**	**(191,554,931,561)**	**2,026,561,262**	**313,441,974,354**
ຍອດຍົກມາ ໃນວັນທີ 1 ມັງກອນ 2019 (ດັດແກ້)	**470,000,000,000**	**27,638,932,340**	**(898,908,935)**	**544,522,558**	**3,708,530,711**	**1,977,267,979**	**(191,554,931,561)**	**2,026,561,262**	**313,441,974,354**
ສ່ວນຕ່າງຈາກການແປງຄ່າເງິນຕາຕ່າງປະເທດ	-	-	-	(544,522,558)	-	-	-	-	(544,522,558)
ສະພາບຄ່ອງຂອງບໍລິສັດໃນເຄືອ	-	-	-	-	-	-	-	(82,151,276)	(82,151,276)
ຈັດສັນສຳຮອງ ຕາມລະບຽບການ	-	-	-	-	463,521,381	-	(463,521,381)	-	-
ຂາດທຶນໃນປີປັດຈຸບັນ (ດັດແກ້)	-	-	-	-	-	-	(80,282,505,228)	44,538,563	(80,237,966,665)
ຍອດເຫຼືອທ້າຍປີ ວັນທີ 31 ທັນວາ 2019 (ດັດແກ້)	**470,000,000,000**	**27,638,932,340**	**(898,908,935)**	**-**	**4,172,052,092**	**1,977,267,979**	**(272,300,958,170)**	**1,988,948,549**	**232,577,333,855**
ຍອດຍົກມາ ໃນວັນທີ 1 ມັງກອນ 2020 (ດັດແກ້)	**470,000,000,000**	**27,638,932,340**	**(898,908,935)**	**-**	**4,172,052,092**	**1,977,267,979**	**(272,300,958,170)**	**1,988,948,549**	**232,577,333,855**
ຈັດປະເພດຄືນໃໝ່ການຄວບຄຸມຮ່ວມ	-	-	898,908,935	-	-	-	(898,908,935)	-	-
ຈັດສັນ - ສຳຮອງຕາມລະບຽບການ	-	-	-	-	1,120,180,137	-	(1,120,180,137)	-	-
ຂາດທຶນໃນປີປັດຈຸບັນ	-	-	-	-	-	-	(22,534,867,500)	103,681,592	(22,431,185,908)
ຍອດເຫຼືອທ້າຍປີ ວັນທີ 31 ທັນວາ 2020	**470,000,000,000**	**27,638,932,340**	**-**	**-**	**5,292,232,229**	**1,977,267,979**	**(296,854,914,742)**	**2,092,630,141**	**210,146,147,947**

ທ່ານ ຈັນທອນ ມີດທິໄຊ
ຜູ້ອຳນວຍການໃຫຍ່

ວັນທີ: 29 ເມສາ 2021

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ເມສາ 2021

ໃບລາຍງານກະແສເງິນສົດສັງລວມກິດຈະການ
ສຳລັບທ້າຍປີ ສິ້ນສຸດໃນວັນທີ 31 ທັນວາ 2020

	ບິດ ອະທິບາຍ	2020 ກີບ	2019 ດັດແກ້ ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ:			
ຂາດທຶນສຸດທິ ກ່ອນຫັກອາກອນໃນປີ		(19,252,111,546)	(78,802,124,805)
ປັບປຸງເພື່ອສົມທຽບກຳໄລສຸດທິ ກັບ ເງິນສົດ			
ຄ່າຫຼ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ	9,10,11	18,757,397,571	20,893,340,015
ກັບລາຍການບັນຊີສຳຮອງສິນຄ້າໃນສາງ		-	(72,830,568)
ກັບລາຍການບັນຊີສຳຮອງໜີ້ສົງໃສຈະເສຍ		(876,624,181)	(370,950,000)
ສຳຮອງໜີ້ສົງໃສຈະເສຍ		-	1,059,150,006
ກຳໄລຈາກການຂາຍຊັບສິນ	9	(365,907)	254,780
ສະສາງຊັບສິນບັດຄົງທີ		-	2,088,246,741
ຂາດທຶນຈາກການສະສາງການລົງທຶນອື່ນໆ		-	1,739,914,514
ລາຍຮັບດອກເບ້ຍ		(1,229,078,125)	(2,482,177,537)
ລາຍຈ່າຍດອກເບ້ຍ		34,810,350,996	29,106,991,445
ລາຍຈ່າຍອາກອນລາຍໄດ້		(3,179,074,362)	(1,435,841,860)
ຂາດທຶນໃນການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ		**29,030,494,446**	**(28,276,027,269)**
ການປ່ຽນແປງໃນຊັບສິນ ແລະ ໜີ້ສິນ ການດຳເນີນງານ			
ໜີ້ຕ້ອງຮັບທາງການຄ້າ		9,832,062,917	(11,170,115,828)
ສິນຄ້າໃນສາງ		365,599,087	(8,100,417,656)
ໜີ້ຕ້ອງສົ່ງທາງການຄ້າ		(34,476,465,721)	48,446,650,298
ຄ້າງຈ່າຍໜີ້ຕ້ອງສົ່ງອາກອນ		502,739,108,484	516,104,930,572
ຊັບສິນໝຸນວຽນອື່ນໆ		(45,665,931,098)	(9,953,751,335)
ໜີ້ສິນໝຸນວຽນອື່ນໆ		17,376,088,462	(6,367,509,891)
ເງິນທີ່ໄດ້ຈາກການດຳເນີນງານ		**479,200,956,577**	**500,683,758,891**
ດອກເບ້ຍຮັບ		163,045,921	148,132,852
ດອກເບ້ຍຈ່າຍ		(15,292,054,428)	(29,297,265,666)
ອາກອນອື່ນໆ ແລະ ອາກອນຈ່າຍຕາມລະບຽບການ		(501,790,749,985)	(504,571,030,034)
ເງິນສົດສຸດທິເກີດຈາກ (ໃຊ້ໃນ) ກິດຈະກຳການດຳເນີນງານ		**(37,718,801,915)**	**(33,036,403,957)**
ກະແສເງິນສົດຈາກກິດຈະກຳການລົງທຶນ:			
ການໄດ້ມາຂອງຊັບສິນຄົງທີ	9,11	(4,584,535,276)	(2,526,259,889)
ຫຼຸດລົງເງິນລົງທຶນ ຂອງຜູ້ຖືຮຸ້ນສ່ວນນ້ອຍ		-	(626,673,834)
ສະສາງຊັບສິນບັດຄົງທີ	9	2,090,090	-
ເງິນໃຫ້ກູ້ຢືມຈ່າຍ ພາຍໃນປີ	24.5	(5,339,105,284)	(1,305,862,565)
ເງິນໃຫ້ກູ້ຢືມຮັບ ພາຍໃນປີ	24.5	744,273,200	3,417,940,000
ເງິນສົດສຸດທິ ຈາກ (ໃຊ້ໃນ) ກິດຈະກຳການລົງທຶນ		**(9,177,277,270)**	**(1,040,856,288)**

ທ່ານ ຈັນທອນ ສິດທິໄຊ
ຜູ້ອຳນວຍການໃຫຍ່

ວັນທີ: 29 ເມສາ 2021

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ເມສາ 2021

ໃບລາຍງານກະແສເງິນສົດສັງລວມກິດຈະການ
ສຳລັບທ້າຍປີ ສິ້ນສຸດໃນວັນທີ 31 ທັນວາ 2020

	ບິດ ອະທິບາຍ	2020 ກີບ	2019 ດັດແກ້ ກີບ
ກະແສເງິນສົດຈາກກິດຈະກຳການເງິນ:			
ເງິນສົດຮັບຈາກການກູ້ຢືມ	15	165,064,067,218	558,201,182,000
ຊຳລະຄືນເງິນກູ້ຢືມ	15	(118,590,553,797)	(529,190,265,000)
ເງິນສົດສຸດທິຈາກ (ໃຊ້ໃນ) ກິດຈະກຳການເງິນ		**46,473,513,421**	**29,010,917,000**
ຫຼຸດລົງ ສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(422,565,764)	(5,066,343,245)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນປີ	5	7,436,128,462	12,515,355,962
ກຳໄລ (ຂາດທຶນ) ຈາກການແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(1,041,279,974)	(12,884,255)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍປີ		**5,972,282,724**	**7,436,128,462**
ລາຍການສຳຄັນທີ່ບໍ່ແມ່ນເງິນສົດ			
ບັນຊີໜີ້ຕ້ອງສົ່ງ ສຳລັບຊັບສິນຄົງທີ	9	380,115,563	510,757,306

ທ່ານ ຈັນທອນ ສິດທິໄຊ
ຜູ້ອຳນວຍການໃຫຍ່

ວັນທີ: 29 ເມສາ 2021

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 29 ເມສາ 2021

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ. ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີ ຕະຫຼອດການກວດສອບ. ການດຳເນີນງານຂອງພວກເຮົາລວມມີ:

- ລະບຸ ແລະ ປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນລວມ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ວາງແຜນ ແລະ ດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫາຫຼັກຖານ ທີ່ ພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດຢ່າງ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການ ສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າ ແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນ ໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບ ຄຸມພາຍໃນຂອງກຸ່ມບໍລິສັດ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ວິທີການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການ ເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.
- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີ ສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ອຳນວຍການໂດຍອີງຕາມ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈເຮັດ ໃຫ້ເກີດຂໍ້ສົງໃສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງກຸ່ມບໍລິສັດ ຫຼືບໍ່. ຖ້າພວກເຮົາສະຫຼຸບໄດ້ ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງກ່າວໄວ້ໃນບົດລາຍງານຂອງຜູ້ກວດສອບ ຂອງພວກເຮົາກັບຂໍ້ມູນທີ່ກ່ຽວຂ້ອງທີ່ ໄດ້ເປີດເຜີຍໃນເອກະສານລາຍງານການເງິນລວມ, ຫຼືຖ້າການເປີດເຜີຍດັ່ງກ່າວບໍ່ພຽງພໍ ຄວາມເຫັນຂອງພວກເຮົາກໍ່ຈະປ່ຽນແປງໄປ. ຂໍ້ ສະຫຼຸບຂອງພວກເຮົາ ຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານ ຂອງພວກເຮົາ. ເຖິງຢ່າງໃດກໍຕາມ, ເຫດການ ຫຼື ສະພາບຕົວຈິງໃນອານາຄົດອາດເປັນສາເຫດໃຫ້ ກຸ່ມບໍລິສັດບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.
- ການຫາຫຼັກຖານທີ່ເໝາະສົມ ແລະ ພຽງພໍສຳລັບການອອກຄວາມເຫັນຂອງພວກເຮົາຕໍ່ງົບການເງິນລວມ ບົນພື້ນຖານຂໍ້ມູນການເງິນ ຫຼື ກິດຈະກຳຂອງກຸ່ມບໍລິສັດ. ນອກຈາກນີ້ພວກເຮົາຍັງຮັບຜິດຊອບໃນການຊີ້ນຳ ແລະ ດຳເນີນການກວດສອບໃນລະດັບຂອງກຸ່ມບໍລິສັດ ແຕ່ພວກເຮົາຍັງຈະເປັນຄົນຮັບຜິດຊອບຕໍ່ຄວາມເຫັນຂອງຜູ້ກວດສອບຂອງພວກເຮົາ.

ພວກເຮົາໄດ້ສື່ສານກັບຄະນະກຳມະການການກວດສອບກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້, ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງ ການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫລັກຈັນຍາບັນກ່ຽວຂ້ອງກັບຄວາມເປັນ ອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນທີ່ ອາດພິຈາລະນາເຖິງຜົນກະທົບຕໍ່ຄວາມເປັນອິດສະຫຼະ ຂອງພວກເຮົາ ແລະ ຫລັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນ ອິດສະຫຼະ.

pwc

ຈາກບັນຫາທີ່ປຶກສາກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາບັນຫາເຫຼົ່ານັ້ນແມ່ນບັນຫາທີ່ມີສາລະສຳຄັນທີ່ສຸດໃນການກວດສອບເອກະສານລາຍງານການເງິນລວມຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ, ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.

ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຸບເປີສ໌ (ລາວ) ຈຳກັດ ຜູ້ດຽວ

ກະຊວງ ການ ເງິນ ນະຄອນ ຫຼວງ ວຽງ ຈັນ
ບໍລິສັດ
ພຣາຍສ໌ວໍເຕີເຮົ້າສ໌ກຸບເປີສ໌ (ລາວ)
ຈຳກັດຜູ້ດຽວ
PricewaterhouseCoopers(Lao)
Sole Company Limited

ທ່ານ ອະພິສິດ ທ່ຽງຕິງພົນໂຍ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ ສປປ ລາວ
ວັນທີ: 29 ເມສາ 2021

1. ຂໍ້ມູນທົ່ວໄປ

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ບໍລິສັດ) ແລະ ບໍລິສັດໃນເຄືອ ເຊິ່ງປະກອບມີ ບໍລິສັດ ປີໂຕຣເທຣດ ພຸ່ມ່າ ເອເນີຈີ ນຳເຂົ້າ-ສົ່ງອອກ ຈຳກັດ ແລະ ບໍລິສັດ ປີໂຕຣເທຣດ ເອເນີຈີ ດິສທະບິວຊັນ ຈຳກັດ ເຊິ່ງໄດ້ດຳເນີນງານ ແລະ ຕັ້ງຢູ່ ສປປ ລາວ (ລວມກັນເອີ້ນວ່າ "ກຸ່ມບໍລິສັດ") ແມ່ນເປັນບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ແລະ ບໍລິສັດຈຳກັດ. ບໍລິສັດໄດ້ຈົດທະບຽນສ້າງຕັ້ງ ແລະ ຈົດທະບຽນກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ລົງວັນທີ 3 ຕຸລາ 2008.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ຖະໜົນກຳແພງເມືອງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກຸ່ມບໍລິສັດ ໄດ້ຖືຮຸ້ນ 99% ໃນ ບໍລິສັດໃນເຄືອ ທັງສອງບໍລິສັດ ເຊັ່ນດຽວກັນ. ກິດຈະກຳຫຼັກຂອງ ກຸ່ມບໍລິສັດ ແມ່ນການນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍຜະລິດຕະພັນ ນ້ຳມັນເຊື້ອໄຟ ແລະ ຜະລິດຕະພັນ ປີໂຕຣລ້ຽມ.

ເອກະສານລາຍການເງິນສັງລວມກິດຈະການ ສະບັບນີ້ ໄດ້ຮັບການເຊັນອະນຸມັດ ໂດຍສະພາຜູ້ອຳນວຍການ ໃນວັນທີ 29 ເມສາ 2021.

2. ນະໂຍບາຍການບັນຊີ

ນະໂຍບາຍການບັນຊີ ຖືກຮັບຮອງນຳໃຊ້ເຂົ້າໃນການສ້າງເອກະສານລາຍງານການເງິນສັງລວມກິດຈະການ ໄດ້ກຳນົດໄວ້ ດັ່ງລຸ່ມນີ້:

2.1 ພື້ນຖານໃນການສະສາງ

ເອກະສານລາຍງານການເງິນສັງລວມກິດຈະການ ໄດ້ຖືກສ້າງຂຶ້ນ ຕາມນະໂຍບາຍການບັນຊີ ຂອງກຸ່ມບໍລິສັດ ດັ່ງທີ່ໄດ້ອະທິບາຍໄວ້ຂ້າງລຸ່ມ ຂອງເອກະສານລາຍງານການເງິນສັງລວມກິດຈະການ ສະບັບນີ້ ແລະ ໄດ້ສ້າງຂຶ້ນໂດຍໃຊ້ເກນລາຄາຕົ້ນທຶນເດີມໃນການວັດມູນຄ່າຂອງອົງປະກອບຂອງເອກະສານລາຍງານການເງິນ.

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ, ເຖິງຢ່າງໃດກໍ່ຕາມ, ກະຊວງການເງິນໄດ້ອອກແຈ້ງການ ສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສຳລັບ PIEs ໃນການຈັດການເຮັດແຜນປະຕິບັດການ ສຳລັບການນຳ IFRS ມາໃຊ້ພາຍໃນໄລຍະເວລາສີ່ປີ. ໃນຂະນະນີ້ຜູ້ບໍລິຫານກຳລັງກະກຽມແຜນປະຕິບັດການ ສຳລັບການດຳເນີນການຕາມ IFRS ຕາມແຈ້ງການ.

ຫຼັກການບັນຊີທີ່ນຳໃຊ້ອາດແຕກຕ່າງຢ່າງມີສາລະສຳຄັນ ຈາກຫຼັກການບັນຊີ IFRS. ຄວາມແຕກຕ່າງເຫຼົ່ານີ້ແມ່ນ: ສັນຍາເຊົ່າ, ຜົນປະໂຫຍດຂອງພະນັກງານ, ຜົນກະທົບຂອງການປ່ຽນແປງໃນອັດຕາແລກປ່ຽນເງິນຕາຕ່າງປະເທດ ແລະ ອາກອນກຳໄລ ແລະ ອາກອນກຳໄລເລື່ອນຊຳລະ, ເຄື່ອງມືທາງການເງິນ ແລະ ຕົ້ນທຶນກ່ອນການດຳເນີນງານ.

ການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຝ່າຍບໍລິຫານ ຕ້ອງມີການຄາດຄະເນ ແລະ ກຳນົດຂໍ້ສົມມຸດຖານຫຼາຍປະການ ເພື່ອສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ. ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ຈຳນວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກຄາດຄະເນປະຕິບັດດັ່ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານ ກ່ຽວກັບເຫດການ ແລະ ການປະຕິບັດຕົວຈິງໃນປັດຈຸບັນ ເຊິ່ງການຄາດຄະເນໃນເບື້ອງຕົ້ນ ອາດຈະມີຄວາມແຕກຕ່າງກັນ ຢ່າງເປັນສາລະສຳຄັນ.

ກຸ່ມບໍລິສັດ ໄດ້ນຳໃຊ້ນະໂຍບາຍການບັນຊີ ສຳລັບການລວມທຸລະກິດ ພາຍໃຕ້ການຄວບຄຸມແບບດຽວກັນ ຕັ້ງແຕ່ປີ 2013, ດັ່ງນັ້ນ ບໍລິສັດໃນເຄືອທັງໝົດ ຈຶ່ງໄດ້ຮັບການລວມບັນຊີຢ່າງສົມບຸນ ນັບຈາກມື້ທີ່ມີການໂອນການຄວບຄຸມບັນຊີໄປຫາ ກຸ່ມບໍລິສັດ. ຊັບສິນ ແລະ ໜີ້ສິນຂອງບໍລິສັດໃນເຄືອ ແມ່ນຖືກຮັບຮູ້ດ້ວຍລາຄາຕາມບັນຊີ. ສ່ວນເກີນ / ຫຼຸດລົງ ລະຫວ່າງສິ່ງຕອບແທນທີ່ຈ່າຍໃນ ສ່ວນຂອງຜູ້ຖືຮຸ້ນ ຕາມມູນຄ່າທາງບັນຊີ ແລະ ຈະຖືເປັນລາຍການແຍກຕ່າງຫາກ ເຊິ່ງເປັນ "ເງິນສຳຮອງຈາກການລວມທຸລະກິດພາຍໃຕ້ການຄວບຄຸມດຽວກັນ".

2. ນະໂຍບາຍການບັນຊີ (ຕໍ່)

2.2 ການບັນຊີຂອງກຸ່ມບໍລິສັດ - ເງິນລົງທຶນໃນບໍລິສັດໃນເຄືອ

ບໍລິສັດໃນເຄືອ ເປັນກິດຈະການທັງໝົດ (ລວມເຖິງໂຄງສ້າງຕ່າງໆ) ເຊິ່ງກຸ່ມບໍລິສັດ ມີອຳນາດຄວບຄຸມກິດຈະການ ບໍລິສັດໃນເຄືອ ໝາຍເຖິງກິດຈະການທີ່ບໍລິສັດ ຄວບຄຸມ, ກຸ່ມບໍລິສັດ ມີອຳນາດຄວບຄຸມກິດຈະການເມື່ອ ກຸ່ມບໍລິສັດ ຮັບ ຫຼື ມີສິດໃນຜົນຕອບແທນຜັນປ່ຽນ ກ່ຽວຂ້ອງກັບຜູ້ໄດ້ຮັບການລົງທຶນ ແລະ ມີຄວາມສາມາດໃຊ້ອຳນາດ ເໜືອຜູ້ໄດ້ຮັບການການລົງທຶນ ເພື່ອໃຫ້ໄດ້ຜົນຕອບແທນຜັນປ່ຽນ ກຸ່ມບໍລິສັດ ລວມເອກະສານລາຍງານການເງິນຂອງບໍລິສັດໃນເຄືອໄວ້ໃນ ເອກະ ສານລາຍການເງິນສັງລວມກິດຈະການ ຕັ້ງແຕ່ວັນທີ ກຸ່ມບໍລິສັດມີອຳນາດໃນການຄວບຄຸມບໍລິສັດໃນເຄືອຈົນເຖິງ ວັນທີບໍລິສັດ ສູນເສຍອຳນາດການຄວບຄຸມໃນບໍລິສັດໃນເຄືອນັ້ນ.

ລາຍການເຄື່ອນໄຫວລະຫວ່າງກັນໃນກຸ່ມບໍລິສັດ ຍອດຍັງເຫຼືອ ແລະ ກຳໄລ ຫຼື ຂາດທຶນ ທີ່ບໍ່ໄດ້ເກີດຂຶ້ນຈິງ ລະຫວ່າງກັນ ໃນກຸ່ມບໍລິສັດ ຈະຖືກລົບລ້າງອອກໃນເວລາ ທີ່ເຮັດເອກະສານລາຍງານການເງິນສັງລວມກິດຈະການ ລາຍການບັນຊີ ຂອງ ບໍລິສັດໃນເຄືອ ຈະຖືກປັບປຸງເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງກຸ່ມບໍລິສັດ.

2.3 ການຕີມູນຄ່າເງິນຕາຕ່າງປະເທດ

ລາຍການທີ່ສະແດງໃນແຕ່ລະລາຍການຂອງ ເອກະສານລາຍງານການເງິນສັງລວມກິດຈະການ ໄດ້ຖືກນຳສະເໜີດ້ວຍ ສະກຸນເງິນກີບ.

ລາຍການທີ່ເປັນສະກຸນເງິນຕາຕ່າງປະເທດໄດ້ຖືກຕີມູນຄ່າເປັນສະກຸນເງິນກີບ ດ້ວຍການນຳໃຊ້ອັດຕາແລກປ່ຽນໃນມື້ທີ່ ລາຍການດັ່ງກ່າວເກີດຂຶ້ນ.

ຊັບສິນ ແລະ ໜີ້ສິນ ທີ່ເປັນສະກຸນເງິນຕາຕ່າງປະເທດຍັງເຫຼືອໃນທ້າຍປີ ໄດ້ຖືກຕີມູນຄ່າເປັນສະກຸນເງິນກີບໂດຍນຳໃຊ້ ອັດຕາແລກປ່ຽນໃນທ້າຍປີ. ຜົນຕ່າງທັງໝົດຈາກການປ່ຽນຄ່າທີ່ຍັງບໍ່ເກີດຂຶ້ນຈິງແມ່ນຖືກຮັບຮູ້ໃນໃບລາຍງານຖານະການ ເງິນສັງລວມກິດຈະການ ແລະ ຈະຖືກດັດປັບລາຍການໃນປີຕໍ່ໄປ.

ກຳໄລ ຫຼື ຂາດທຶນ ຈາກອັດຕາແລກປ່ຽນທີ່ເກີດຂຶ້ນຈິງຈະຖືກຮັບຮູ້ເຂົ້າໃນໃບລາຍງານຜົນໄດ້ຮັບສັງລວມກິດຈະການເມື່ອ ມີການຊຳລະ.

ກຸ່ມບໍລິສັດ, ບໍລິສັດໃນເຄືອ, ຜົນການດຳເນີນງານ ແລະ ໃບລາຍງານຖານະການເງິນຂອງບໍລິສັດ ເຊິ່ງມີສະກຸນເງິນທີ່ໃຊ້ໃນ ການນຳສະເໜີແຕກຕ່າງຈາກ ສະກຸນເງິນທີ່ໃຊ້ໃນການນຳສະເໜີຂອງບໍລິສັດ ຈະຖືກແປງຄ່າມາເປັນສະກຸນເງິນທີ່ໃຊ້ໃນການ ນຳສະເໜີຂອງ ບໍລິສັດ ດັ່ງນີ້:

- ສຳລັບຊັບສິນ ແລະ ໜີ້ສິນ ທີ່ຢູ່ໃນໃບສະຫຼຸບຊັບສິນບັດ ໃຫ້ໃຊ້ອັດຕາແລກປ່ຽນໃນມື້ສຸດທ້າຍທີ່ລາຍງານຖານະການ ເງິນ ຍົກເວັ້ນທຶນຈົດທະບຽນ ເຊິ່ງນຳສະເໜີໃນຕົ້ນທຶນເດີມ.
- ສຳລັບລາຍຮັບ ແລະ ລາຍຈ່າຍ ໃນໃບລາຍງານຜົນໄດ້ຮັບ ໃຫ້ໃຊ້ອັດຕາແລກປ່ຽນສະເລ່ຍ ໃນລະຫວ່າງປີ.
- ສ່ວນຜິດຕ່ຽງຈາກອັດຕາແລກປ່ຽນທັງໝົດ ໃຫ້ຖືກບັນທຶກສະແດງພາຍໃຕ້ການແປງຄ່າທີ່ດັດແກ້ໃນເບື້ອງຂອງທຶນ.

ອັດຕາແລກປ່ຽນໄດ້ນຳໃຊ້ຈາກ ທະນາຄານທ້ອງຖິ່ນທີ່ມີຊື່ສຽງ ໃນ ສປປ ລາວ.

2. ນະໂຍບາຍການບັນຊີ (ຕໍ່)

2.4 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ປະກອບດ້ວຍ: ເງິນສົດຢູ່ໃນມື, ເງິນຝາກ ຢູ່ໃນທະນາຄານ ຫຼື ສະຖາບັນການເງິນອື່ນໆ ໄລຍະສັ້ນ ມີສະພາບຄ່ອງໃນການລົງທຶນສູງ ໃນໄລຍະເວລາ 3 ເດືອນ ຫຼື ໜ້ອຍກວ່າ.

2.5 ໜີ້ຕ້ອງຮັບທາງການຄ້າ

ໜີ້ຕ້ອງຮັບທາງການຄ້າ ຮັບຮູ້ຕາມມູນຄ່າໃບເກັບເງິນຕົ້ນສະບັບ ແລະ ຕີມູນຄ່າຄືນໃໝ່ໂດຍໃຊ້ມູນຄ່າຍັງເຫຼືອຫັກ ສຳຮອງໜີ້ຕ້ອງຮັບທວງຍາກຕາມມູນຄ່າເຫຼືອ ຕາມບັນຊີທ້າຍປີ. ສຳຮອງໜີ້ຕ້ອງຮັບທວງຍາກ ແມ່ນສ່ວນຜິດຕ່ຽງລະຫວ່າງ ມູນຄ່າຍັງເຫຼືອໃນບັນຊີຂອງ ໜີ້ຕ້ອງຮັບ ແລະ ຈຳນວນເງິນທີ່ຄາດວ່າຈະເກັບກູ້ຄືນໄດ້. ສຳລັບໜີ້ສູນຈະໄດ້ສະສາງອອກ ຈາກບັນຊີໃນປີ ແລະ ຮັບຮູ້ເຂົ້າໃນໃບລາຍງານຜົນໄດ້ຮັບ ໃນສ່ວນຂອງລາຍຈ່າຍບໍລິຫານ.

ນະໂຍບາຍການຕັ້ງສຳຮອງໜີ້ທວງຍາກສຳລັບໜີ້ຕ້ອງຮັບຈາກບໍລິສັດອື່ນມີດັ່ງລຸ່ມນີ້:

ຈາກ 6 ເດືອນ ເຖິງ 1 ປີ	30%
ຈາກ 1 ປີ ເຖິງ 2 ປີ	50%
2 ປີຂຶ້ນໄປ	100%

ກຸ່ມບໍລິສັດ ບໍ່ມີນະໂຍບາຍການຕັ້ງສຳຮອງໜີ້ທວງຍາກສຳລັບ ບໍລິສັດ ທີ່ກ່ຽວຂ້ອງ ເຊິ່ງລວມເຖິງເງິນໃຫ້ກູ້ຢືມ, ໜີ້ຕ້ອງຮັບ ແລະ ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ.

2.6 ເຄື່ອງໃນສາງ

ເຄື່ອງໃນສາງ ໄດ້ຖືກສະແດງ ໃນລາຄາຕົ້ນທຶນ ຫຼື ໃນມູນຄ່າຂາຍອອກໄດ້ສຸດທິທີ່ຕ່ຳກວ່າ, ເຊິ່ງຕົ້ນທຶນຂອງເຄື່ອງໃນສາງ ໄດ້ຖືກກຳນົດໂດຍວິທີສະເລ່ຍຖ່ວງນ້ຳໜັກ ຕົ້ນທຶນໃນການຊື້ເຄື່ອງໃນສາງ ປະກອບດ້ວຍ ລາຄາຊື້ ແລະ ຕົ້ນທຶນຄ່າໃຊ້ຈ່າຍທາງກົງທີ່ເກີດຈາກການຊື້ເຄື່ອງໃນສາງ ເຊັ່ນ: ພາສີນຳເຂົ້າ ແລະ ຄ່າໃຊ້ຈ່າຍການຂົນສົ່ງ, ລົບ ບັນດາສ່ວນຫຼຸດ ເງິນແຮ ຫຼື ການສົ່ງຄືນ. ມູນຄ່າຂາຍອອກໄດ້ສຸດທິແມ່ນການປະເມີນລາຄາຂາຍ ໃນຊ່ວງເວລາປົກກະຕິຂອງການດຳເນີນທຸລະກິດ ລົບ ຕົ້ນທຶນລວມ ແລະ ຄ່າໃຊ້ຈ່າຍໃນການຂາຍເຄື່ອງໃນສາງ. ສ່ວນຫຼຸດມູນຄ່າອາດຈະ ສ້າງຂຶ້ນໄດ້ໃນກໍລະນີທີ່ມີເຫດການສະເພາະ ສຳລັບເຄື່ອງໃນສາງພົ້ນສະໄໝ, ຮອບວຽນຂາຍຊ້າ ແລະ ສິນຄ້າເສຍຫາຍ.

ກຸ່ມບໍລິສັດໄດ້ມີການປ່ຽນແປງນະໂຍບາຍການບັນຊີ ສຳລັບວິທີຄິດໄລ່ຕົ້ນທຶນຂອງເຄື່ອງໃນສາງ ວິທີເຂົ້າກ່ອນ-ອອກກ່ອນ ເປັນວິທີຄິດໄລ່ຕົ້ນທຶນແບບສະເລ່ຍຖ່ວງນ້ຳໜັກ ເຊິ່ງເຫັນວ່າຜົນກະທົບສຳລັບການປ່ຽນແປງນະໂຍບາຍການບັນຊີ ແມ່ນບໍ່ມີສາລະສຳຄັນ.

2.7 ຊັບສິນເພື່ອການລົງທຶນ

ຊັບສິນທີ່ຖືຄອງໂດຍກຸ່ມບໍລິສັດ ເພື່ອຫາປະໂຫຍດຈາກລາຍໄດ້ຄ່າເຊົ່າ ຫຼື ຈາກການເພີ່ມຂຶ້ນຂອງມູນຄ່າຂອງຊັບສິນ ຫຼື ທັງສອງຢ່າງ ແລະ ບໍ່ໄດ້ມີໄວ້ໃນງານໂດຍກິດຈະການໃນກຸ່ມບໍລິສັດ ຈະຖືກຈັດປະເພດເປັນ ຊັບສິນ ເພື່ອການລົງທຶນ ລວມເຖິງຊັບສິນທີ່ຢູ່ລະຫວ່າງກໍ່ສ້າງ ຫຼື ພັດທະນາ ເພື່ອເປັນຊັບສິນ ເພື່ອການລົງທຶນໃນອະນາຄົດ.

ທີ່ດິນຈະຖືກບັນທຶກເປັນຊັບສິນ ເພື່ອການລົງທຶນຂອງກຸ່ມບໍລິສັດ ຊັບສິນດັ່ງກ່າວ ຖືກນຳໃຊ້ເຂົ້າໃນການລົງທຶນໄປແລ້ວ.

ຊັບສິນເພື່ອການລົງທຶນ ຈະບັນທຶກເບື້ອງຕົ້ນໂດຍລາຄາທຶນໂດຍລວມຕົ້ນທຶນທີ່ກ່ຽວຂ້ອງສຳລັບການໄດ້ມາຂອງຊັບສິນເພື່ອການລົງທຶນ.

2. ນະໂຍບາຍການບັນຊີ (ຕໍ່)

2.7 ຊັບສິນເພື່ອການລົງທຶນ (ຕໍ່)

ຕົ້ນທຶນທີ່ເກີດຂຶ້ນພາຍຫຼັງຈາກການໄດ້ມາຈະຖືກບັນທຶກເປັນຕົ້ນທຶນຂອງຊັບສິນເພື່ອການລົງທຶນເມື່ອມີຄວາມເປັນໄປໄດ້ວ່າ ຈະເກີດຜົນປະໂຫຍດດ້ານເສດຖະກິດໃນອະນາຄົດເຂົ້າສູ່ກຸ່ມບໍລິສັດ ແລະ ສາມາດປະມານການໄດ້ຢ່າງໜ້າເຊື່ອຖື ຕົ້ນທຶນການສ້ອມແປງຈະຖືກບັນທຶກເປັນລາຍຈ່າຍເມື່ອເກີດຂຶ້ນ ເມື່ອມີການປ່ຽນສ່ວນປະກອບຂອງຊັບສິນເພື່ອການລົງທຶນສ່ວນປະກອບນັ້ນ ຈະຖືກລ້າງມູນຄ່າອອກຈາກບັນຊີ.

ຫຼັງຈາກການຮັບຮູ້ຕົ້ນທຶນ ຊັບສິນໃນການລົງທຶນໃນເບື້ອງຕົ້ນ, ຊັບສິນດັ່ງກ່າວຕ້ອງໄດ້ຖືກ ຫັກ ຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເຊື່ອມສະສົມ.

ທີ່ດິນບໍ່ໄດ້ຫັກຄ່າຫຼ້ຍຫ້ຽນ, ຄ່າຫຼ້ຍຫ້ຽນຂອງຊັບສິນເພື່ອການລົງທຶນຈະຄິດໄລ່ຫັກຄ່າຫຼ້ຍຫ້ຽນໂດຍໃຊ້ ມູນຄ່າຫຼັງຫັກລາຄາທີ່ຄາດວ່າຈະຂາຍໄດ້ ໂດຍວິທີແບບສະໝ່ຳສະເໝີຕາມອາຍຸການໃຊ້ງານທີ່ຄາດຄະເນຂອງແຕ່ລະລາຍການຊັບສິນ ດັ່ງຕໍ່ໄປນີ້:

ອາຄານ ແລະ ການປັບປຸງ	7– 10 ປີ

2.8 ຊັບສິນຄົງທີ່ມີຕົວຕົນ

ລາຍການຂອງຊັບສິນຄົງທີ່ມີຕົວຕົນ ໄດ້ຖືກບັນທຶກບັນຊີຕາມມູນຄ່າຕົ້ນທຶນເດີມ ຫັກຄ່າຫຼ້ຍຫ້ຽນສະສົມ, ມູນຄ່າຕົ້ນທຶນເດີມ ແມ່ນລວມມີລາຍຈ່າຍທີ່ກ່ຽວຂ້ອງໂດຍກົງ ຂອງຊັບສິນນັ້ນ.

ຕົ້ນທຶນທີ່ເກີດຂຶ້ນພາຍຫຼັງຈາກການໄດ້ມາຈະຖືກບັນທຶກລວມເປັນຕົ້ນທຶນຂອງຊັບສິນນັ້ນ ຫຼື ແຍກບັນທຶກເມື່ອມີຄວາມເປັນໄປໄດ້ວ່າຈະເກີດຜົນປະໂຫຍດດ້ານເສດຖະກິດໃນອະນາຄົດເຂົ້າສູ່ກຸ່ມບໍລິສັດ ແລະ ສາມາດປະມານການໄດ້ຢ່າງໜ້າເຊື່ອຖື ຕົ້ນທຶນການສ້ອມແປງຈະຖືກບັນທຶກເປັນລາຍຈ່າຍເມື່ອເກີດຂຶ້ນ ເມື່ອມີການປ່ຽນສ່ວນປະກອບຂອງຊັບສິນ ສ່ວນປະກອບນັ້ນ ຈະຖືກລ້າງມູນຄ່າອອກຈາກບັນຊີ.

ຄ່າສ້ອມແປງ ແລະ ຄ່າບຳລຸງຮັກສາແມ່ນໄດ້ບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບໃນລະຫວ່າງ ໄລຍະການເງິນທີ່ເກີດຂຶ້ນ, ທີ່ດິນແມ່ນບໍ່ມີຄ່າຫຼ້ຍຫ້ຽນ, ການຫັກຄ່າຫຼ້ຍຫ້ຽນຊັບສິນຄົງທີ່ມີຕົວຕົນ ຈະໃຊ້ວິທີສະເລ່ຍ ບົນພື້ນຖານ ອາຍຸການໃຊ້ງານຄາດຄະເນຂອງແຕ່ລະລາຍການຊັບສິນ ດັ່ງຕໍ່ໄປນີ້:

ອານຄານ ແລະ ການປັບປຸງອາຄານ	5 - 30 ປີ
ເຄື່ອງຈັກ ແລະ ອຸປະກອນຕ່າງໆ	2 - 10 ປີ
ພາຫະນະ	5 ປີ
ເຄື່ອງໃຊ້ສຳນັກງານ	2-10 ປີ

ກຳໄລ ແລະ ຂາດທຶນ ຈາກການຂາຍຊັບສິນຄົງທີ່ໄດ້ຖືກກຳນົດໂດຍການສົມທຽບລາຄາຂາຍ ກັບ ມູນຄ່າຕາມບັນຊີ ແລະ ຈົດເພີ່ມເຂົ້າໃນຜົນໄດ້ຮັບຈາກການດຳເນີນງານຂອງ ກຸ່ມບໍລິສັດ.

2. ນະໂຍບາຍການບັນຊີ (ຕໍ່)

2.9 ຊັບສິນຄົງທີ່ບໍ່ມີຕົວຕົນ

ຊັບສິນຄົງທີ່ບໍ່ມີຕົວຕົນແມ່ນປະກອບມີ ໂປຣແກຣມຄອມພິວເຕີ, ການຊື້ລິຂະສິດໃນການນຳໃຊ້ໂປຣແກຣມຄອມພິວເຕີໄດ້ ຈັດເປັນມູນຄ່າຊັບສິນຄົງທີ່ ບົນພື້ນຖານຄ່າໃຊ້ຈ່າຍທີ່ເກີດຂຶ້ນ ຈາກການຊື້ ແລະ ການສົ່ງ-ມອບ ຈົນກຽມພ້ອມໃຊ້ງານ, ຄ່າ ໃຊ້ຈ່າຍເຫຼົ່ານີ້ຖືກຫັກເປັນຄ່າໃຊ້ຈ່າຍ ຕະຫຼອດອາຍຸການໃຊ້ງານ, ເຊິ່ງບໍ່ເກີນ 2-10 ປີ, ຕົ້ນທຶນທີ່ກ່ຽວຂ້ອງກັບໂປຣແກຣມ ຄອມພິວເຕີສ່ວນທີ່ເຫຼືອຈະບັນທຶກເປັນລາຍຈ່າຍເມື່ອເກີດຂຶ້ນຈິງ.

2.10 ເງິນກູ້ຢືມ

ເງິນກູ້ຢືມ ແມ່ນຮັບຮູ້ຕາມຈຳນວນເງິນທີ່ໄດ້ຮັບ ຕົ້ນທຶນຂອງເງິນກູ້ຢືມເຊິ່ງປະກອບມີດອກເບ້ຍຈ່າຍ ແລະ ຕົ້ນທຶນທາງ ກົງອື່ນໆທີ່ກຸ່ມບໍລິສັດໄດ້ຈ່າຍໄປເພື່ອການກູ້ຢືມເງິນ ຕົ້ນທຶນການກູ້ຢືມເງິນທີ່ນຳໃຊ້ທໍ່ອໄປຈະຖືກບັນທຶກເປັນລາຍຈ່າຍໃນ ລະຫວ່າງປີທີ່ເກີດ

ຕົ້ນທຶນການກູ້ຢືມເກີດຂຶ້ນ ແລະ ກ່ຽວຂ້ອງໂດຍກົງກັບການຈັດຫາການກໍ່ສ້າງໃນຊ່ວງໄລຍະເວລາກໍ່ສ້າງຈົນສ້າງແລ້ວສຳ ເລັດ ພ້ອມໃຊ້ງານ ຈະຖືກບັນທຶກເປັນຕົ້ນທຶນຂອງຊັບສິນນັ້ນ.

ຕົ້ນທຶນຄ່າຈັດການເງິນກູ້ຢືມ ຈະບັນທຶກເປັນລາຍຈ່າຍລ່ວງໜ້າ ແລະ ຕັດຈ່າຍເຂົ້າໃນໃນລາຍງານຜົນໄດ້ຮັບຕາມອາຍຸສັນຍາ ການກູ້ຢືມ.

ເງິນກູ້ຢືມ ໄດ້ຖືກຈຳແນກໃຫ້ເປັນໜີ້ໝຸນວຽນ ຍົກເວັ້ນໃນກໍລະນີທີ່ ກຸ່ມບໍລິສັດ ໄດ້ຮັບສິດໃນການການຊຳລະໜີ້ຂອງໜີ້ສິນ ທັງໝົດ ຢ່າງຕ່ຳເປັນເວລາ 12 ເດືອນ ພາຍຫຼັງວັນທີ ຂອງບົດລາຍງານ.

2.11 ສັນຍາເຊົ່າ

ສັນຍາເຊົ່າ ທີ່ກຸ່ມບໍລິສັດເປັນຜູ້ເຊົ່າ

ສັນຍາເຊົ່າ ທີ່ບໍ່ໄດ້ໂອນຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນໃຫ້ແກ່ຜູ້ເຊົ່າ ເຊິ່ງຈຳແນກສັນຍາເຊົ່າດັ່ງກ່າວ ເປັນສັນຍາເຊົ່າ ປົກກະຕິໃນການດຳເນີນທຸລະກິດ ລາຍຈ່າຍພາຍໃຕ້ສັນຍາເຊົ່າ (ລວມທຸກລາຍການ ທີ່ໄດ້ຮັບຈາກຜູ້ໃຫ້ເຊົ່າ) ຖືກຈັດເປັນລາຍ ຈ່າຍໃນໃບລາຍງານຜົນໄດ້ຮັບ ແບບສະເລ່ຍຕາມອາຍຸການຂອງສັນຍາເຊົ່າ.

ເມື່ອສັນຍາເຊົ່າ ມີການຍົກເລີກສັນຍາກ່ອນໝົດອາຍຸການເຊົ່າ, ຈຳນວນເງິນຄ່າເຊົ່າ ແລະ ຄ່າໃຊ້ຈ່າຍອື່ນໆ ຈະຕົກເປັນຂອງຜູ້ ໃຫ້ເຊົ່າໃນຮູບແບບການປັບໃໝ ແລະ ຮັບຮູ້ເປັນຄ່າໃຊ້ຈ່າຍໃນຮອບເວລາທີ່ມີການຍົກເລີກສັນຍາດັ່ງກ່າວ.

ສັນຍາເຊົ່າທີ່ດິນ ອາຄານ ແລະ ອຸປະກອນ ເຊິ່ງຜູ້ເຊົ່າເປັນຜູ້ຮັບຄວາມສ່ຽງ ແລະ ຜົນຕອບແທນຂອງຄວາມເປັນເຈົ້າຂອງ ເກືອບທັງໝົດ ຄືເປັນສັນຍາເຊົ່າການເງິນ ຊຶ່ງຈະບັນທຶກເປັນລາຍຈ່າຍຝ່າຍທຶນດ້ວຍມູນຄ່າຍຸດຕິທຳຂອງຊັບສິນທີ່ເຊົ່າ ຫຼື ມູນ ຄ່າປະຈຸບັນສຸດທິ ຂອງຈຳນວນເງິນທີ່ຕ້ອງຈ່າຍຕາມສັນຍາເຊົ່າ ແລະ ແຕ່ມູນຄ່າໃດຈະຕ່ຳກວ່າ.

ຈຳນວນເງິນທີ່ຕ້ອງຈ່າຍດັ່ງກ່າວຈະປັນສ່ວນລະຫວ່າງໜີ້ສິນ ແລະ ລາຍຈ່າຍທາງການເງິນ ເພື່ອໃຫ້ໄດ້ອັດຕາດອກເບ້ຍຄົງທີ່ຕໍ່ ໜີ້ສິນຄ້າງຈ່າຍ ໂດຍພິຈາລະນາແຍກແຕ່ລະສັນຍາ ພາລະຜູກພັນຕາມສັນຍາເຊົ່າຫັກລາຍຈ່າຍທາງການເງິນ ຈະບັນທຶກເປັນ ໜີ້ສິນໄລຍະຍາວ ສ່ວນດອກເບ້ຍຈ່າຍຈະບັນທຶກໃນໃບລາຍງານຜົນໄດ້ຮັບຕະຫຼອດອາຍຸຂອງສັນຍາເຊົ່າ ເພື່ອເຮັດໃຫ້ອັດຕາ ດອກເບ້ຍແຕ່ລະງວດເປັນອັດຕາດອກເບ້ຍຄົງທີ່ ສຳລັບຍອດເຫຼືອຂອງໜີ້ສິນທີ່ເຫຼືອຢູ່ ຊັບສິນທີ່ໄດ້ມາຕາມສັນຍາເຊົ່າການ ເງິນຈະຄິດໄລ່ຄ່າຫລຸ້ຍຫ້ຽນຕະຫຼອດອາຍຸການໃຊ້ງານຂອງຊັບສິນທີ່ເຊົ່າ ຫຼື ອາຍຸຂອງສັນຍາເຊົ່າ ແລ້ວແຕ່ໄລຍະເວລາໃດຈະ ໜ້ອຍກວ່າ.

2. ນະໂຍບາຍການບັນຊີ (ຕໍ່)

2.11 ສັນຍາເຊົ່າ (ຕໍ່)

ສັນຍາເຊົ່າ ທີ່ທາງກຸ່ມບໍລິສັດເປັນຜູ້ໃຫ້ເຊົ່າ

ຊັບສິນທີ່ທາງກຸ່ມບໍລິສັດໃຫ້ເຊົ່າ ພາຍໃຕ້ສັນຍາເຊົ່າໃນການດຳເນີນທຸລະກິດ ຖືກຮັບຮູ້ເປັນຊັບສິນຄົງທີ່ມີຕົວຕົນໃນໃບສະຫຼຸບຊັບສິນບັດສັງລວມກິດຈະການ ແລະ ຖືກຫັກຄ່າຫຼ້ຍຫ້ຽນຕາມອາຍຸການນຳໃຊ້ທີ່ໄດ້ຄາດຄະເນໄວ້ ລາຍຮັບຈາກຄ່າເຊົ່າ (ລົບທຸກລາຍການ ທີ່ໄດ້ມອບໃຫ້ຜູ້ເຊົ່າ) ຖືກຮັບຮູ້ ແບບສະເລ່ຍຕາມອາຍຸການຂອງສັນຍາເຊົ່າດັ່ງກ່າວ.

2.12 ອາກອນກຳໄລ

ກຸ່ມບໍລິສັດ ບັນທຶກອາກອນລາຍໄດ້ ຕາມຫຼັກເກນຄ້າງຮັບຄ້າງຈ່າຍ ຕາມກົດໝາຍສ່ວຍສາອາກອນລາວ. ກຸ່ມບໍລິສັດ ບໍ່ໄດ້ ບັນທຶກ ອາກອນລາຍໄດ້ທີ່ຄ້າງຈ່າຍ ຫຼື ຄ້າງຮັບ ໃນອະນາຄົດ ເຊິ່ງເກີດຈາກສ່ວນຜິດຊົ່ວຄາວ. ລາຍຈ່າຍອາກອນແມ່ນຮັບຮູ້ບົນພື້ນຖານຜົນການດຳເນີນງານໃນປີຫຼັງດັດແກ້ ທີ່ບໍ່ສາມາດຫັກລາຍຈ່າຍ ແລະ ລາຍການເຄື່ອນໄຫວອື່ນໆ ຕາມກົດໝາຍວ່າ ດ້ວຍສ່ວຍສາອາກອນ ແລະ ອັດຕາອາກອນ. ພາຍໃຕ້ລະບຽບການບັນຊີ ແລະ ກົດໝາຍສ່ວຍສາອາກອນ ລາຍຈ່າຍອາກອນໃນປີແມ່ນໄດ້ຄິດໄລ່ຕາມພື້ນຖານລາຍຮັບຂອງບໍລິສັດ (ບົດອະທິບາຍ ຂໍ້ທີ 22).

ໃນ ສປປ ລາວ ອາກອນລາຍໄດ້ຕ້ອງໄດ້ຮັບການກວດກາລາຍລະອຽດຄືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ບົນພື້ນຖານທົ່ວໄປ. ນອກຈາກນີ້, ຂໍ້ພິບເຫັນທີ່ເກີດຂຶ້ນຈາກການກວດກາຄືນດັ່ງກ່າວອາດຈະຕ້ອງມີຄຳເຫັນ ແລະ ຕີລາຄາ ໂດຍພາກສ່ວນທີ່ກ່ຽວຂ້ອງ ເຊິ່ງອາດຈະມີຜົນກະທົບຕໍ່ກຸ່ມບໍລິສັດ ແລະ ອາດສົ່ງຜົນໃຫ້ເກີດການຊຳລະ ອາກອນເພີ່ມເຕີມ ຫຼື ຮັບຄືນ ໃນ ກໍລະນີຈຳເປັນ ແລະ ສາລະສຳຄັນ. ເຊິ່ງອາດຈະມີຜົນໃນການຈ່າຍເງິນ ຫຼື ຮັບຄືນ ຂອງການຮັບຮູ້ລາຍຈ່າຍອາກອນລາຍໄດ້ພາຍໃນປີທີ່ມີການກວດກາໄດ້ສຳເລັດ.

2.13 ທຶນຈົດທະບຽນ

ຮຸ້ນສາມັນ ແລະ ຮຸ້ນບຸລິມະສິດແບບໄຖ່ຖອນຄືນບໍ່ໄດ້ ແຕ່ມີສິດໄດ້ຮັບເງິນປັນຜົນຈະຖືກຈັດປະເພດເປັນທຶນຂອງຂາຮຸ້ນ.

ສ່ວນເພີ່ມມູນຄ່າຮຸ້ນຈະຖືກບັນທຶກເມື່ອມີການອອກຈຳໜ່າຍຮຸ້ນ ຫຼື ມີການເພີ່ມຮຸ້ນ ໂດຍສະແດງຜົນຕ່າງຂອງລາຄາທີ່ສະເໜີຂາຍ ແລະ ລາຄາຕົ້ນທຶນທີ່ຈົດທະບຽນໄວ້ ຫຼັງຈາກຫັກ ຕົ້ນທຶນໃນການອອກຮຸ້ນ (ເຊັ່ນ underwriting fees ລາຍຈ່າຍອື່ນໆ ທີ່ກ່ຽວກັບການກະເມີນມູນຄ່າ ແລະ ຄ່າທີ່ປຶກສາ).

ອີງຕາມຄຸ່ມແນະນຳການປະຕິບັດສະບັບເລກທີ 056/ຄຄຊ ອອກໂດຍ ຄຄຊ ລົງວັນທີ 28 ເມສາ 2015, ໂດຍອະນຸຍາດໃຫ້ ບໍລິສັດ ສົ່ງຄືນສ່ວນເພີ່ມມູນຄ່າຮຸ້ນທີ່ເກີດຈາກການເຂົ້າຕະຫຼາດຄັ້ງທຳອິດ ຈຳນວນ 75% ຫຼັງຈາກໄດ້ຫັກຕົ້ນທຶນການອອກຮຸ້ນແລ້ວ, ແກ່ຜູ້ຖືຮຸ້ນເຊິ່ງສ້າງຕັ້ງບໍລິສັດ.

2. ນະໂຍບາຍການບັນຊີ (ຕໍ່)

2.14 ການຮັບຮູ້ລາຍຮັບ

ລາຍຮັບໃນໃບເກັບເງິນຈາກການຂາຍສິນຄ້າສຸດທິຫຼັງຫັກສ່ວນຫຼຸດທີ່ໄດ້ຮັບ ແລະ ສ່ວນຫຼຸດຈາກການສັ່ງຊື້. ລາຍຮັບຈາກການຂາຍສິນຄ້າຮັບຮູ້ເມື່ອຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນເຈົ້າຂອງສິນຄ້າແມ່ນຖືກໂອນ ຫຼື ຖືກສົ່ງໃຫ້ຜູ້ຊື້.

ລາຍຮັບທີ່ມາຈາກການໃຫ້ເຊົ່າ ໄດ້ຖືກຮັບຮູ້ ແບບສະເລ່ຍຕະຫຼອດອາຍຸສັນຍາເຊົ່າ.

ລາຍຮັບອື່ນໆ ແມ່ນໄດ້ຮັບຮູ້ບົນພື້ນຖານ ດັ່ງລຸ່ມນີ້:

- ລາຍຮັບ ດອກເບ້ຍ ຮັບຮູ້ຕາມພື້ນຖານອັດຕາສ່ວນຂອງເວລາ ໃນສ່ວນຂອງຍອດໜີ້ຄ້າງຊຳລະ ແລະ ໃນອັດຕາດອກເບ້ຍ ຕາມສັນຍາຈົນເຖິງກຳນົດໄລຍະເວລາ ແລະ ລາຍຮັບດັ່ງກ່າວຈະຖືກຮັບຮູ້ເປັນລາຍຮັບຄ້າງຮັບເຂົ້າກຸ່ມບໍລິສັດ.
- ລາຍຮັບອື່ນໆ ແມ່ນຮັບຮູ້ຕາມເກນຄ້າງຮັບຄ້າງຈ່າຍ.

3. ການປ່ຽນແປງນະໂຍບາຍການບັນຊີ

ກຸ່ມບໍລິສັດ ໄດ້ຮັບການອະນຸມັດຈາກ ສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບລາວ (ຄຄຊ) ເລກທີ 040/ຄຄຊ ລົງວັນທີ 4 ມີນາ 2021 ແລະ ໜັງສືຮັບຮອງຈາກກົມບັນຊີ ສະບັບເລກທີ 302/ກບຊ, ລົງວັນທີ 24 ກຸມພາ 2021 ໃນການຮັບຮູ້ລາຍການບັນຊີ ສຳລັບ ກຳໄລ/ຂາດທຶນ ທີ່ບໍ່ເກີດຂຶ້ນຈິງຈາກອັດຕາແລກປ່ຽນ ຜ່ານການແປງຄ່າຊັບສິນ ແລະ ໜີ້ສິນ ຂອງສະກຸນເງິນຕ່າງປະເທດ ໃນໃບລາຍງານຖານະການເງິນສັງລວມກິດຈະການ. ກຳໄລ ຫຼື ຂາດທຶນ ຈາກອັດຕາແລກປ່ຽນທີ່ເກີດຂຶ້ນຈິງຈະຖືກຮັບຮູ້ເຂົ້າໃນໃບລາຍງານຜົນໄດ້ຮັບສັງລວມກິດຈະການ (ບົດອະທິບາຍຂໍ້ 2.3).

ດັ່ງນັ້ນ, ຜູ້ບໍລິຫານຂອງກຸ່ມ ບໍລິສັດ ໄດ້ຕັດສິນໃຈປ່ຽນແປງນະໂຍບາຍການບັນຊີວ່າດ້ວຍການຮັບຮູ້ ກຳໄລ/(ຂາດທຶນ) ທີ່ຍັງບໍ່ເກີດຂຶ້ນຈິງ ໃນປີ 2020 (ບົດອະທິບາຍຂໍ້ 2.3). ຜູ້ບໍລິຫານຂອງກຸ່ມບໍລິສັດ ໄດ້ຈັດທຳການປັບປຸງບັນຊີຍ້ອນຫຼັງກັບຍອດຍົກມາ ຈຳນວນ 1,492,334,945 ກີບ.

ຜົນກະທົບຂອງການປ່ຽນແປງນະໂຍບາຍ ການບັນຊີຂ້າງເທິງນີ້ ຕໍ່ເອກະສານລາຍງານການເງິນຂອງກຸ່ມ ບໍລິສັດ ວັນທີ 31 ທັນວາ 2019 ດັ່ງລຸ່ມນີ້:

	31 ທັນວາ 2019		
	ມູນຄ່າເດີມ ກີບ	ເພີ່ມຂຶ້ນ/ຫຼຸດລົງ ກີບ	ດັດແກ້ ກີບ
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ (ບົດອະທິບາຍຂໍ້ 8)	92,766,304,739	1,719,606,960	94,485,911,699
ໜີ້ສິນໝຸນວຽນ			
ໜີ້ສິນໝຸນວຽນອື່ນໆ (ບົດອະທິບາຍຂໍ້ 16)	(26,685,191,743)	(227,272,015)	(26,912,463,758)
ທຶນ			
ຂາດທຶນສະສົມ	(273,795,565,835)	1,494,607,665	(272,300,958,170)
ຜູ້ຖືຮຸ້ນສ່ວນນ້ອຍ	1,991,221,269	(2,272,720)	1,988,948,549

3. ການປ່ຽນແປງນະໂຍບາຍການບັນຊີ (ຕໍ່)

ຜົນກະທົບຕໍ່ໃບລາຍງານຜົນໄດ້ຮັບ ຂອງປີສິ້ນສຸດວັນທີ 31 ທັນວາ 2019 ມີດັ່ງລຸ່ມນີ້:

	ມູນຄ່າເດີມ ກີບ	ເພີ່ມຂຶ້ນ/ຫຼຸດລົງ ກີບ	ດັດແກ້ ກີບ
ກຳໄລ (ຂາດທຶນ) ອື່ນໆ, ສຸດທິ	(28,730,663,136)	541,789,403	(28,188,873,733)
ຂາດທຶນສຸດທິ ຂອງປີ	(80,779,756,068)	541,789,403	(80,237,966,665)
ຂາດທຶນ ທີ່ເປັນສ່ວນຂອງ:			
ບໍລິສັດ ແມ່	(80,826,108,206)	543,602,978	(80,282,505,228)
ຜູ້ຖືຮຸ້ນສ່ວນນ້ອຍ	46,352,138	(1,813,575)	44,538,563
ກຳໄລ (ຂາດທຶນ) ຕໍ່ຮຸ້ນ			
ພື້ນຖານກຳໄລ/(ຂາດທຶນ) ຕໍ່ຮຸ້ນ (ບົດອະທິບາຍຂໍ້ 23)	(344)	2	(342)

4. ເຫດການສຳຄັນ ທີ່ເກີດຂຶ້ນພາຍໃນປີ

ການລະບາດຂອງພະຍາດ COVID-19 ໄດ້ມີການຂະຫຍາຍຕົວຢ່າງວ່ອງໄວໃນປີ 2020, ໂດຍມີຜູ້ຕິດເຊື້ອເປັນຈຳນວນຫຼວງຫຼາຍໃນທົ່ວໂລກ. ພາກສ່ວນຂອງລັດຖະບານ ໄດ້ມີການອອກມາດຕະການຕ່າງໆ ເພື່ອຄວບຄຸມພະຍາດ ເຊິ່ງໄດ້ສົ່ງຜົນກະທົບຕໍ່ກັບກິດຈະກຳທາງດ້ານເສດຖະກິດ ໃນ ສປປ ລາວ, ໃນຂະນະທີ່ລະດັບການຕິດເຊື້ອໃນລາວ ຍັງຢູ່ໃນລະດັບຕ່ຳ.

ກຸ່ມບໍລິສັດ ຍັງຄົງສືບຕໍ່ດຳເນີນທຸລະກິດຢ່າງຕໍ່ເນື່ອງ ແລະ ໄດ້ນຳໃຊ້ຊຸດປະຕິບັດການຕາມຂໍ້ກຳນົດຢ່າງຮັດກຸມ ເພື່ອຕິດຕາມ ແລະ ປ້ອງກັນການແຜ່ລະບາດຂອງພະຍາດ COVID-19 ທີ່ອາດຈະເກີດຂຶ້ນໃນກຸ່ມບໍລະສັດ. ກຸ່ມບໍລິສັດ ຍັງຄົງສືບຕໍ່ປະຕິບັດຕາມນະໂຍບາຍ ແລະ ຄຳແນະນຳຕ່າງໆ ເພື່ອເປັນການຮັກສາຂໍ້ກຳນົດກ່ຽວກັບພະຍາດ COVID-19 ທີ່ເພີ່ມຂຶ້ນໃນເດືອນທັນວາ 2020 ທີ່ອາດຈະເກີດຂຶ້ນໃນອະນາຄົດ.

ໃນຊ່ວງໄລຍະເວລາທີ່ຢາກລຳບາກນີ້ ພວກເຮົາມີຄວາມເຊື່ອໝັ້ນໃນແນວທາງການດຳເນີນງານ ດ້ານການເງິນທີ່ຍືນຍົງຂອງ ກຸ່ມບໍລິສັດ. ນອກຈາກນີ້ຜູ້ບໍລິຫານ ຍັງມີຄວາມໝັ້ນໃຈວ່າຈະບໍ່ມີຜົນກະທົບທີ່ມີສາລະສຳຄັນຕໍ່ງົບການເງິນຂອງ ກຸ່ມບໍລິສັດ ສຳລັບປີສິ້ນສຸດ 31 ທັນວາ 2020.

5. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	2020 ກີບ	2019 ກີບ
ເງິນສົດໃນມື	397,036,263	1,394,978,528
ເງິນສົດໃນທະນາຄານ	5,575,246,461	6,041,149,934
	5,972,282,724	**7,436,128,462**

6. ໜີ້ຕ້ອງຮັບທາງການຄ້າ, ສຸດທິ

	2020 ກີບ	2019 ກີບ
ໜີ້ຕ້ອງຮັບທາງການຄ້າ – ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 24.3)	16,563,640,168	13,258,851,920
ໜີ້ຕ້ອງຮັບທາງການຄ້າ – ພາກສ່ວນທີ່ສາມ	107,363,629,489	120,484,948,933
	124,448,429,657	**133,743,800,853**
ຫັກ:ສຳຮອງບັນຊີໜີ້ສົງໄສຈະເສຍ	(8,413,513,781)	(8,889,018,584)
ໜີ້ຕ້ອງຮັບທາງການຄ້າ, ສຸດທິ	**116,034,897,876**	**124,854,782,269**

7. ສິນຄ້າໃນສາງ, ສຸດທິ

	2020 ກີບ	2019 ກີບ
ນ້ຳມັນເຊື້ອໄຟ	22,122,950,459	22,557,622,553
ນ້ຳມັນເຄື່ອງ	1,119,980,991	1,150,725,521
ເຄື່ອງໃຊ້ຫ້ອງການ ແລະ ອ່ຳໄຫ	905,782,513	893,727,019
ບັດເຕີມນ້ຳມັນ Plus card	112,375,154	101,595,496
ສີນ້ຳມັນ	69,174,874	87,478,080
	24,330,263,991	**24,791,148,669**
ຫັກ: ຄ່າເຊື່ອມມູນຄ່າຕາມມູນຄ່າ ເນື່ອງຈາກລ້າສະໄໝ ແລະ ເຄື່ອນໄຫວຊ້ຳ	-	(95,285,591)
ສິນຄ້າໃນສາງ, ສຸດທິ	**24,330,263,991**	**24,695,863,078**

8. ຊັບສິນໝຸນວຽນອື່ນໆ

	2020 ກີບ	2019 ດັດແກ້ ກີບ
ໜີ້ຕ້ອງຮັບອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ*	72,921,519,008	60,005,594,663
ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ	6,945,932,782	13,108,227,243
ເງິນຈ່າຍມັດຈຳໃຫ້ຜູ້ສະໜອງ	4,216,164,602	1,531,483,451
ເງິນຈ່າຍລ່ວງໜ້າໃຫ້ພະນັກງານ	47,000,000	30,000,000
ເງິນຈ່າຍລ່ວງໜ້າສຳລັບອາກອນກຳໄລ	2,119,460,468	2,127,538,318
ໜີ້ຕ້ອງຮັບອາກອນມູນຄ່າເພີ່ມ	184,889,808	154,800,014
ໜີ້ຕ້ອງຮັບອື່ນໆ	933,388,510	576,371,922
ໜີ້ຕ້ອງຮັບດອກເບ້ຍ ຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 24.3)	14,927,099,558	13,861,067,354
ເງິນຈ່າຍລ່ວງໜ້າຄ່າເຊົ່າສາງສິນຄ້າ	37,361,774	1,371,221,774
ຂາດທຶນລໍຖ້າຕັດບັນຊີ ຈາກອັດຕາແລກປ່ຽນ ທີ່ບໍ່ໄດ້ເກີດຂຶ້ນຈິງ (ບົດອະທິບາຍຂໍ້ 3)	28,143,083,937	1,719,606,960
	130,475,900,447	**94,485,911,699**

*ປະກອບມີ ໜີ້ຕ້ອງຮັບຈາກຜູ້ບໍລິຫານຈຳນວນ 46,946,068,616 ກີບ (2019: 40,583,324,823 ກີບ). ເງິນລ່ວງໜ້າໃຫ້ພາກສ່ວນທີ່ກ່ຽວຂ້ອງ ຈຳນວນ 14,642,026,686 ກີບ (2019: 9,224,341,291 ກີບ) ແລະ ໜີ້ຕ້ອງຮັບອື່ນໆຈາກພາກສ່ວນທີ່ກ່ຽວຂ້ອງ ຈຳນວນ 11,333,423,706 ກີບ (2019: 10,197,928, 549 ກີບ) (ບົດອະທິບາຍຂໍ້ 24.3).

9. ຊັບສິນຄົງທີ່ມີຕົວຕົນ, ສຸດທິ

	ທີ່ດິນ ກີບ	ອາຄານ ແລະ ການປັບປຸງ ກີບ	ເຄື່ອງຈັກ ແລະ ອຸປະກອນ ກີບ	ເຄື່ອງໃຊ້ຫ້ອງການ ກີບ	ຍານພາຫະນະ ກີບ	ຊັບສິນພວມ ກໍ່ສ້າງ ກີບ	ລວມ ກີບ
ວັນທີ 1 ມັງກອນ 2020							
ຕົ້ນທຶນ	174,687,386,841	176,502,998,626	57,227,034,476	20,402,569,684	11,336,500,648	7,088,409,220	447,244,899,495
ຫັກ: ຄ່າຫຼ້ຍຫ້ຽນສະສົມ	-	(53,271,055,205)	(38,50,743,599)	(16,677,807,095)	(11,017,301,459)	-	(119,466,907,358)
ມູນຄ່າຕາມບັນຊີສຸດທິ	**174,687,386,841**	**123,231,943,421**	**18,726,290,877**	**3,724,762,589**	**319,199,189**	**7,088,409,220**	**327,777,992,137**
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2020							
ຍອດຍົກມາມູນຄ່າຕາມບັນຊີສຸດທິ	174,687,386,841	123,231,943,421	18,726,290,877	3,724,762,589	319,199,189	7,088,409,221	327,777,992,137
ເພີ່ມຂຶ້ນ	-	1,284,658,737	112,754,300	786,840,201	-	2,909,833,451	5,094,086,689
ສະສາງ	-	-	-	-	(1,724,183)	-	(1,724,183)
ຄ່າຫຼ້ຍຫ້ຽນ (ບົດອະທິບາຍຂໍ້ 21)	-	(10,662,606,607)	(4,310,165,884)	(1,387,813,322)	(534,816,690)	-	(16,895,402,503)
ໂອນຈາກຊັບສິນຄົງທີ ເພື່ອການລົງທຶນ (ບົດອະທິບາຍຂໍ້ 11)	-	1,258,050,233	-	-	-	-	1,258,050,233
ໂອນເຂົ້າ (ອອກ)	-	2,075,674,754	507,594,848	(397,561,225)	550,134,646	(2,865,278,873)	(129,435,850)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**174,687,386,841**	**117,187,720,538**	**15,036,474,141**	**2,726,228,243**	**332,792,962**	**7,132,963,798**	**317,103,566,523**
ວັນທີ 31 ທັນວາ 2020							
ຕົ້ນທຶນ	174,687,386,841	181,861,471,444	57,847,383,624	20,791,848,659	11,875,144,294	7,132,963,798	453,811,169,322
ຫັກ: ຄ່າຫຼ້ຍຫ້ຽນສະສົມ	-	(64,673,750,906)	(42,810,909,483)	(18,065,620,416)	(11,542,351,332)	-	(136,707,602,799)
ມູນຄ່າຕາມບັນຊີສຸດທິ	**174,687,386,841**	**117,187,720,538**	**15,036,474,141**	**2,726,228,243**	**332,792,962**	**7,132,963,798**	**317,103,566,523**

ຊັບສິນຄົງທີ່ມີຕົວຕົນບາງລາຍການແມ່ນໄດ້ນຳໄປເປັນຫຼັກຊັບຄ້ຳປະກັນສຳລັບເງິນກູ້ຢືມຂອງ ກຸ່ມບໍລິສັດ (ບົດອະທິບາຍຂໍ້ 15).

10. ຊັບສິນບັດຄົງທີ່ ບໍ່ມີຕົວຕົນ, ສຸດທິ

	ໂປແກຼມຄອມພິວເຕີ ກີບ
ວັນທີ 1 ມັງກອນ 2020	
ຕົ້ນທຶນ	10,077,231,628
ຫັກ: ຄ່າເຊື່ອມມູນຄ່າສະສົມ	(3,818,503,218)
ມູນຄ່າຍັງເຫຼືອຕາມບັນຊີ ສຸດທິ	**6,258,728,410**
ສຳລັບປີສິ້ນສຸດວັນທີ 31 ທັນວາ 2020	
ຍອດຍົກມາມູນຄ່າຕາມບັນຊີສຸດທິ	6,258,728,410
ຄ່າເຊື່ອມມູນຄ່າ (ບົດອະທິບາຍຂໍ້ 21)	(1,084,932,865)
ມູນຄ່າຍັງເຫຼືອຕາມບັນຊີ ສຸດທິ	**5,173,795,545**
ວັນທີ 31 ທັນວາ 2020	
ຕົ້ນທຶນ	10,077,231,628
ຫັກ: ຄ່າເຊື່ອມມູນຄ່າສະສົມ	(4,903,436,083)
ມູນຄ່າຍັງເຫຼືອຕາມບັນຊີ ສຸດທິ	**5,173,795,545**

11. ຊັບສິມບັດຄົງທີ່ເພື່ອການລົງທຶນ, ສຸດທິ

	ທີ່ດິນ ກີບ	ອາຄານ ກີບ	ລວມ ກີບ
ວັນທີ 1 ມັງກອນ 2020			
ຕົ້ນທຶນ	77,052,474,129	22,454,878,484	99,507,352,613
ຫັກ: ຄ່າຫຼ້ຽຫ້ຽນສະສົມ	-	(12,998,200,306)	(12,998,200,306)
ມູນຄ່າຍັງເຫຼືອຕາມບັນຊີ ສຸດທິ	**77,052,474,129**	**9,456,678,178**	**86,509,152,307**
ສຳລັບປີສິ້ນສຸດວັນທີ 31 ທັນວາ 2020			
ຍອດຍົກມາມູນຄ່າຕາມບັນຊີສຸດທິ	77,052,474,129	9,456,678,178	86,509,152,307
ເພີ່ມຂຶ້ນ	-	-	-
ຄ່າຫຼ້ຽຫ້ຽນ (ບົດອະທິບາຍຂໍ້ 21)	-	(777,062,203)	(777,062,203)
ໂອນຈາກຊັບສິນຄົງທີ່ມີຕົວຕົນ (ບົດອະທິບາຍຂໍ້ 9)	-	(1,258,050,233)	(1,258,050,233)
ມູນຄ່າຍັງເຫຼືອຕາມບັນຊີ ສຸດທິ	**77,052,474,129**	**7,421,565,742**	**84,474,039,871**
ວັນທີ 31 ທັນວາ 2020			
ຕົ້ນທຶນ	77,052,474,129	10,637,379,752	87,689,853,881
ຫັກ: ຄ່າຫຼ້ຽຫ້ຽນສະສົມ	-	(3,215,814,010)	(3,215,814,010)
ມູນຄ່າຍັງເຫຼືອຕາມບັນຊີ ສຸດທິ	**77,052,474,129**	**7,421,565,742**	**84,474,039,871**

ຊັບສິມບັດຄົງທີ່ເພື່ອການລົງທຶນໝາຍເຖິງ ທີ່ດິນ, ອາຄານ ແລະ ສະຖານີປ້ຳນ້ຳມັນໃນນະຄອນຫຼວງວຽງຈັນ, ສປປ ລາວ ເຊິ່ງໃຫ້ເຊົ່າ ແກ່ພາກສ່ວນທີ່ກ່ຽວຂ້ອງ ແລະ ທີ່ດິນອື່ນໆໃນ ແຂວງສະຫວັນນະເຂດ.

ສິດນຳໃຊ້ທີ່ດິນບາງແຫ່ງໃນ ແຂວງວຽງຈັນ ແລະ ແຂວງສະຫວັນນະເຂດ ແມ່ນໃຊ້ເປັນຫຼັກຊັບຄ้ำປะกันสำลับเงินกู้ยืมของ กุ่มบໍລິสัด (ບົດອະທິບາຍຂໍ້ 15).

12. ຊັບສິນບໍ່ໝຸນວຽນອື່ນໆ

	2020 ກີບ	2019 ກີບ
ຈ່າຍລ່ວງໜ້າຄ່າເຊົ່າທີ່ດິນ*	51,486,429,095	40,349,128,910
ຈ່າຍລ່ວງໜ້າສຳລັບສະຖານີປ້ຳນ້ຳມັນ ແລະ ອື່ນໆ	6,567,238,000	6,567,238,000
	58,053,667,095	**46,916,366,910**

*ປะกอบมีค่าเช่าที่ดินจ่ายล่วงหน้าจากพากส่วนที่กี่ยวข้องจำนวน 34,419,839,505 กีบ (2019: 34,419,839,505 กีบ) (บีดอะทีบายข้อ 24.3).

13. ໜີ້ຕ້ອງສົ່ງທາງການຄ້າ

	2020 ກີບ	2019 ກີບ
ໜີ້ຕ້ອງສົ່ງທາງການຄ້າ – ພາກສ່ວນທີ່ສາມ	69,641,822,303	109,333,108,117
ໜີ້ຕ້ອງສົ່ງທາງການຄ້າ – ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 24.3)	12,779,938,583	6,984,385,308
	82,421,760,886	**116,317,493,425**

14. ໜີ້ຕ້ອງສົ່ງອາກອນ

	2020 ກີບ	2019 ກີບ
ໜີ້ຕ້ອງສົ່ງອາກອນມູນຄ່າເພີ່ມ	5,190,956,799	4,482,816,490
ໜີ້ຕ້ອງສົ່ງອາກອນລາຍໄດ້ສ່ວນບຸກຄົນ	70,289,703	108,764,761
ໜີ້ຕ້ອງສົ່ງອາກອນລາຍໄດ້	1,478,437,944	1,193,820,793
ໜີ້ຕ້ອງສົ່ງອາກອນອື່ນໆ ແລະ ຕາມລະບຽບການ*	10,823,983,913	10,819,907,816
	17,553,668,359	**16,605,309,860**

*ຍອດຄ້າງຊຳລະຂອງໜີ້ຕ້ອງສົ່ງ ແມ່ນອີງຕາມການປະເມີນ ຂອງເຈົ້າໜ້າທີ່ສ່ວຍສາອາກອນ ລົງວັນທີ 27 ທັນວາ 2019.

ເຈົ້າໜ້າທີ່ອາກອນໄດ້ກວດກາ ແລະ ອອກບົດບັນທຶກກ່ຽວກັບພັນທະຂອງຄ່າໃຊ້ຈ່າຍອາກອນ ສຳລັບ ສົກປີ 2014 ຫາ 2017 ຈຳນວນເງິນ 20,835,576,105 ກີບ. ພ້ອມກັນນີ້, ເຈົ້າໜ້າທີ່ອາກອນໄດ້ລະບຸໃນບົດບັນທຶກວ່າບໍລິສັດອາດຈະມີພັນທະໃນການຈ່າຍຄ່າປັບໃໝ ສຳລັບ ສົກປີ 2014 ຫາ 2017 ຈຳນວນເງິນ 7,417,484,961 ກີບ ເຊິ່ງຈຳນວນດັ່ງກ່າວແມ່ນຍັງບໍ່ສາມາດຕັດສິນໄດ້ ແລະ ຕ້ອງໄດ້ຂໍຄຳເຫັນຈາກກະຊວງການເງິນ.

ຜູ້ບໍລິຫານໄດ້ພິຈາລະນາ ບັນທຶກລາຍຈ່າຍອາກອນຈຳນວນ 20,835,576,105 ກີບ ໃນບົດລາຍງານການເງິນ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2019.

ໃນລະຫວ່າງປີ, ກຸ່ມບໍລິສັດ ໄດ້ຮັບບົດບັນທຶກຈາກກົມສ່ວຍສາອາກອນ ອີງຕາມເອກະສານອ້າງອີງ ເລກທີ 0210 ລົງວັນທີ 28 ມັງກອນ 2020, ບາງສ່ວນຂອງພັນທະຄ່າປັບໄໝ ຂອງປີ 2014 ຫາ 2017 ຈຳນວນ 964,759,679 ກີບ ໄດ້ຮັບອະນຸຍາດໃຫ້ຍົກເວັ້ນ. ດັ່ງນັ້ນ, ໃນວັນທີ 31 ທັນວາ 2020 ກຸ່ມບໍລິສັດ ມີພັນທະໜີ້ຄ່າປັບໄໝທີ່ຍັງສະຫຼຸບບໍ່ໄດ້ ແລະ ຕ້ອງຂໍຄຳຄິດເຫັນສຸດທ້າຍຈາກກະຊວງການເງິນ ຈຳນວນ 6,452,725,282 ກີບ (2019: 7,417,484,961 ກີບ).

ໃນຂະນະດຽວກັນ, ຜູ້ບໍລິຫານ ຍັງດຳເນີນການຂໍການຍົກເວັ້ນພັນທະປັບໃໝດັ່ງກ່າວ. ເນື່ອງຈາກວ່າຍັງບໍ່ມີຄວາມແນ່ນອນຂອງຈຳນວນທີ່ຈະຖືກປັບໄໝ, ຜູ້ບໍລິຫານຈຶ່ງໄດ້ພິຈາລະນາບໍ່ບັນທຶກໜີ້ຕ້ອງສົ່ງ ຄ່າປັບໄໝ ຈຳນວນ 6,452,725,282 ກີບ (2019: 7,417,484,961 ກີບ) ເຂົ້າໃນບົດລາຍງານການເງິນ.

ສຳລັບປີ 2018, 2019 ແລະ 2020 ແມ່ນຢູ່ໃນຂັ້ນຕອນການກວດກາ ໂດຍເຈົ້າໜ້າທີ່ສ່ວຍສາອາກອນ.

15. ເງິນກູ້ຢືມ

	2020 ກີບ	2019 ກີບ
ໝຸນວຽນ		
ສ່ວນໝຸນວຽນຂອງເງິນກູ້ຢືມໄລຍະຍາວຈາກທະນາຄານ	6,632,400,000	34,700,000,000
ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 24.4)	61,074,197,421	-
	67,706,597,421	**34,700,000,000**
ບໍ່ໝຸນວຽນ		
ເງິນກູ້ຢືມຈາກທະນາຄານ	59,691,600,000	-
ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 24.4)	306,704,820,000	326,255,600,000
	366,396,420,000	**326,255,600,000**
	434,103,017,421	**360,955,600,000**

	2020 ກີບ	2019 ກີບ
ຍອດຍົກມາໃນວັນທີ 1 ມັງກອນ	360,955,600,000	306,450,740,000
ຍອດກູ້ຢືມພາຍໃນປີ	165,064,067,218	558,201,182,000
ຍອດຊຳລະພາຍໃນປີ	(118,590,553,797)	(529,190,265,000)
ຂາດທຶນຈາກອັດຕາແລກປ່ຽນ ທີ່ຍັງບໍ່ເກີດຂຶ້ນຈິງ	26,673,904,000	25,493,943,000
ຍອດຍົກມາໃນວັນທີ 31 ທັນວາ	**434,103,017,421**	**360,955,600,000**

ໃນລະຫວ່າງປີ, ກຸ່ມບໍລິສັດ ໄດ້ເຊັນສັນຍາເງິນກູ້ຢືມກັບ 2 ທະນາຄານພາຍໃນ ດັ່ງລຸ່ມນີ້:

ຍອດຄ້າງຊຳລະ	ກຳນົດເວລາ ແລະ ໄລຍະເວລາຊຳລະຄືນ	ອັດຕາ ດອກເບ້ຍ ຕໍ່ປີ	ຫຼັກຊັບຄ້ຳປະກັນ
66,324,000,000 ກີບ	60 ເດືອນ, ເງິນຕົ້ນ ແລະ ດອກເບ້ຍ ແມ່ນຕ້ອງ ຊຳລະທຸກໆເດືອນ, ງວດສຸດທ້າຍຄົບກຳນົດແມ່ນ ວັນທີ 23 ມີນາ 2023.	10,13%	ທີ່ດິນ, ເຮືອນ, ອາຄານ ແລະ ຖັງປິໂຕຣ ລ້ຽມ ທີ່ແຂວງສະຫວັນນະເຂດ, ຈຳປາ ສັກ ແລະ ແຂວງວຽງຈັນ, ພ້ອມທັງຍອດ ຄົງເຫຼືອໃນບັນຊີທະນາຄານ ສອງ ບັນຊີ.
4,972,000 ໂດລາ ສະຫະລັດ ຫຼື ທຽບເທົ່າ 46,224,684,000 ກີບ	33 ເດືອນ, ເງິນຕົ້ນ ແລະ ດອກເບ້ຍ ແມ່ນຕ້ອງ ຊຳລະທຸກໆເດືອນ, ງວດສຸດທ້າຍຄົບກຳນົດແມ່ນ ວັນທີ 26 ກໍລະກົດ 2023.	8%	ທີ່ດິນ ໃນແຂວງວຽງຈັນ, ປາກເຊ, ບໍລິຄຳ ໄຊ ແລະ ຈຳປາສັກ.
2,500,000 ໂດລາ ສະຫະລັດ ຫຼື ທຽບເທົ່າ 23,242,500,000 ກີບ	33 ເດືອນ, ເງິນຕົ້ນ ແລະ ດອກເບ້ຍ ແມ່ນຕ້ອງ ຊຳລະທຸກໆເດືອນ, ງວດສຸດທ້າຍຄົບກຳນົດແມ່ນ ວັນທີ 26 ກໍລະກົດ 2023.	8%	ທີ່ດິນ ໃນແຂວງວຽງຈັນ, ປາກເຊ, ບໍລິຄຳ ໄຊ ແລະ ຈຳປາສັກ.
14,849,513,421 ກີບ	12 ເດືອນ, ເງິນຕົ້ນ ແລະ ດອກເບ້ຍ ແມ່ນຕ້ອງ ຊຳລະທຸກໆເດືອນ, ງວດສຸດທ້າຍຄົບກຳນົດແມ່ນ ວັນທີ 26 ທັນວາ 2020.	10%	ສິດໃນການໃຊ້ປ້ຳນ້ຳມັນ 3 ແຫ່ງ (ປ້ຳ COCO) ໃນແຂວງນະຄອນຫຼວງວຽງ ຈັນ ແລະ ແຂວງບໍລິຄຳໄຊ

15. ເງິນກູ້ຢືມ (ຕໍ່)

ຄວາມສ່ຽງຈາກອັດຕາດອກເບ້ຍເງິນກູ້ຢືມຂອງ ກຸ່ມບໍລິສັດ ມີດັ່ງຕໍ່ໄປນີ້:

	2020 ກີບ	2019 ກີບ
ເງິນກູ້ຢືມ		
- ອັດຕາດອກເບ້ຍຄົງຕົວ	434,103,017,421	360,955,600,000
ລວມເງິນກູ້ຢືມ	**434,103,017,421**	**360,955,600,000**

ກຳນົດເວລາເງິນກູ້ຢືມໄລຍະຍາວ ຈາກທະນາຄານ ມີດັ່ງຕໍ່ໄປນີ້:

	2020 ກີບ	2019 ກີບ
ໃນລະຫວ່າງ 1 ເຖິງ 2 ປີ	366,396,420,000	44,166,276,000
ໃນລະຫວ່າງ 2 ເຖິງ 5 ປີ	-	282,089,324,000
	366,396,420,000	**326,255,600,000**

16. ໜີ້ສິນໝຸນວຽນອື່ນໆ

	2020 ກີບ	2019 ກີບ
ເງິນລ່ວງໜ້າຈາກລູກຄ້າ	4,366,650,358	4,838,206,836
ໜີ້ຕ້ອງສົ່ງອື່ນໆ	9,888,974,112	8,863,161,978
ໜີ້ຕ້ອງສົ່ງອື່ນໆ – ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 24.3)*	21,610,390,903	12,983,822,929
ກຳໄລລໍຖ້າຕັດບັນຊີ ຈາກອັດຕາແລກປ່ຽນທີ່ເກີດຂຶ້ນຈິງ (ບົດອະທິບາຍຂໍ້ 3)	1,066,311,796	227,272,015
	36,932,327,169	**26,912,463,758**

*ປະກອບມີ ໜີ້ຕ້ອງສົ່ງ ຈາກພາກສ່ວນຜູ້ບໍລິຫານ ຈຳນວນ 526,285,059 ກີບ (2019: 3,622,653,284 ກີບ) ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈຳນວນ 21,084,105,844 ກີບ (2019: 9,361,169,645 ກີບ).

17. ທຶນຈົດທະບຽນ ແລະ ສ່ວນເພີ່ມມູນຄ່າຮຸ້ນ

	ຈຳນວນຮຸ້ນ ຮຸ້ນ	ຮຸ້ນສາມັນ ກີບ	ສ່ວນເພີ່ມມູນຄ່າ ຮຸ້ນ ກີບ	ລວມ ກີບ
ວັນທີ 1 ມັງກອນ 2019	235,000,000	470,000,000,000	27,638,932,340	497,638,932,340
ການອອກຮຸ້ນໃໝ່	-	-	-	-
ວັນທີ 31 ທັນວາ 2019	**235,000,000**	**470,000,000,000**	**27,638,932,340**	**497,638,932,340**
ການອອກຮຸ້ນໃໝ່	-	-	-	-
ວັນທີ 31 ທັນວາ 2020	**235,000,000**	**470,000,000,000**	**27,638,932,340**	**497,638,932,340**

18. ຄັງສະສົມຕາມລະບຽບການ

	2020 ກີບ	2019 ກີບ
ວັນທີ 1 ມັງກອນ	4,172,052,092	3,708,530,711
ຄັງສະສົມເພີ່ມຂຶ້ນໃນປີ	1,120,180,137	463,521,381
ວັນທີ 31 ທັນວາ	**5,292,232,229**	**4,172,052,092**

ຄັງສະສົມຕາມລະບຽບການ ແມ່ນສ້າງຂຶ້ນຕາມກົດໝາຍວິສາຫະກິດຂອງ ສປປ ລາວ ເຊິ່ງກຳນົດໃຫ້ ກຸ່ມບໍລິສັດ ຕັ້ງຄັງສະສົມຕາມ ລະບຽບການ ຢ່າງຕ່ຳ 10% ຂອງກຳໄລສຸດທິໃນປີ ຈົນກວ່າຄັງສະສົມຕາມລະບຽບການຄິບ 50% ຂອງມູນຄ່າທຶນຈົດທະບຽນ.

19. ລາຍຮັບ

	2020 ກີບ	2019 ກີບ
ລາຍຮັບຈາກການຂາຍນ້ຳມັນເຊື້ອໄຟ	999,308,877,236	1,270,480,106,102
ລາຍຮັບຈາກການຂາຍນ້ຳມັນເຄື່ອງ	217,421,378	240,153,636
ລາຍຮັບຈາກການຂາຍບັດ Plus card	936,691,121	1,215,674,317
ລາຍຮັບຈາກການຂາຍຢາງຫມາກຕອຍ ແລະ ນ້ຳມັນເຕົາ	128,590,584,751	-
	1,129,053,574,486	**1,271,935,934,055**

20. ລາຍຮັບອື່ນໆ

	2020 ກີບ	2019 ກີບ
ລາຍຮັບຄ່າເຊົ່າ	1,525,177,148	2,492,792,904
ລາຍຮັບດອກເບ້ຍ	1,066,490,620	2,256,025,528
ກຳໄລຈາກການສະສາງຊັບສິນຄົງທີ່	74,225,881	393,094,241
ລາຍຮັບຈາກ ການບໍລິການທາງດ້ານໄອທີ	166,203,284	-
ລາຍຮັບຈາກ ການປະສົມຢາງໝາກຕອຍ	12,552,879,672	-
ລາຍຮັບອື່ນໆ*	1,837,568,563	1,695,048,388
	17,222,545,168	**6,443,866,820**

21. ລາຍຈ່າຍຈຳແນກຕາມລັກສະນະເນື້ອໃນ

	2020 ກີບ	2019 ກີບ
ຕົ້ນທຶນຂອງການຂາຍນ້ຳມັນເຊື້ອໄຟ ແລະ ການບໍລິການ	938,470,379,021	1,190,962,816,101
ຕົ້ນທຶນຂອງການຂາຍນ້ຳມັນເຄື່ອງ	223,774,758	202,778,422
ຕົ້ນທຶນຂອງການຂາຍຢາງໝາກຕ່ອຍ ແລະ ນ້ຳມັນເຕົາ	106,601,014,323	-
ຕົ້ນທຶນຄ່າແຮງງານ	20,179,324,778	19,527,655,148
ຄ່າຫຼ້ຽຫ້ຽນ ແລະ ຄ່າເຊື່ອມມູນຄ່າ (ບົດອະທິບາຍຂໍ້ 9, 10, 11)	18,757,397,571	20,893,340,015
ຄ່າທຳນຽມທະນາຄານ	4,057,984,928	2,916,634,846
ຄ່າຊ່ຽວຊານ	3,881,420,941	3,766,021,530
ລາຍຈ່າຍໃນການດຳເນີນງານ ສຳລັບຫ້ອງການຜູ້ຕາງໜ້າ	9,285,185,045	7,679,449,803
ສຳຮອງໜີ້ສົງໄສຈະເສຍ	401,137,377	1,590,162,392
ລາຍຈ່າຍຄ່າເຊົ່າ	5,654,679,988	3,623,761,676
ລາຍຈ່າຍຄ່າສ້ອມແປງ ແລະ ບຳລຸງຮັກສາ	1,476,312,330	3,439,006,614
ລາຍຈ່າຍຄ່າໂຄສະນາ	1,598,797,312	1,755,455,331
ລາຍຈ່າຍຄ່າຂົນສົ່ງ	12,606,160,217	17,472,733,430
ລາຍຈ່າຍຄ່ານາຍໜ້າ	8,360,437,555	3,548,413,636
ລາຍຈ່າຍອາກອນ	781,535,412	22,507,831,558
	1,132,335,541,556	**1,299,886,060,502**

22. ອາກອນກຳໄລ

ອີງຕາມ ສິດທິພິເສດສຳລັບບໍລິສັດ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບ, ບໍລິສັດ ສາມາດຮັບອັດຕາສ່ວນຫຼຸດອາກອນກຳໄລຈາກອັດຕາ 24% ມາເປັນ 19% ເປັນໄລຍະເວລາ 4 ປີທຳອິດຫຼັງຈາກຈົດທະບຽນເຂົ້າຢຸ່ໃນຕະຫຼາດຫຼັກຊັບ ແຫ່ງ ສປປ ລາວ, ເຊິ່ງອັດຕາ ດັ່ງກ່າວ ແມ່ນສາມາດນຳໃຊ້ ຈາກປີ 2015 ເຖິງປີ 2018. ໃນປີ 2019 ບໍລິສັດໄດ້ນຳໃຊ້ອັດຕາອາກອນ ກຳໄລ 24%.

ອີງຕາມກົດໝາຍສ່ວຍສາອາກອນສະບັບເລກທີ 259 ມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2020, ບໍລິສັດໄດ້ຄິດໄລ່ອາກອນ ກຳໄລຈາກລາຍໄດ້ ອັດຕາ 20% (2019: 24%) ຫຼັງຈາກພິຈາລະນາລາຍຮັບ ແລະ ລາຍຈ່າຍທີ່ບໍ່ສາມາດຫັກອອກໄດ້ແມ່ນ ສອດຄ່ອງກັບກົດໝາຍ ວ່າດ້ວຍສ່ວຍສາອາກອນ.

23. ກຳໄລ (ຂາດທຶນ) ຕໍ່ຮຸ້ນ

ກຳໄລ (ຂາດທຶນ) ພື້ນຖານຕໍ່ຮຸ້ນແມ່ນຄິດໄລ່ ໂດຍການຫານ ກຳໄລ (ຂາດທຶນ) ສຸດທິ ທີ່ເປັນຂອງຜູ້ຖືຮຸ້ນໂດຍຈຳນວນຮຸ້ນສາມັນ ສະເລ່ຍທີ່ອອກພາຍໃນປີ.

	2020	2019 ຄັດແກ້
ກຳໄລ (ຂາດທຶນ) ສຸດທິຂອງຜູ້ຖືຮຸ້ນ (ກີບ)	(25,534,867,500)	(80,282,505,228)
ຈຳນວນຮຸ້ນ ສະເລ່ຍຕາມຮຸ້ນສາມັນທີ່ອອກພາຍໃນປີ (ຮຸ້ນ)	235,000,000	235,000,000
ກຳໄລ (ຂາດທຶນ) ຕໍ່ຮຸ້ນ (ກີບ)	(96)	(342)

ກຳໄລ (ຂາດທຶນ) ພື້ນຖານຕໍ່ຮຸ້ນຂອງ ຜູ້ຖືຮຸ້ນສ່ວນນ້ອຍ 0.1% ແມ່ນບໍ່ເປັນສາລະສຳຄັນ, ດັ່ງນັ້ນ ຈຶ່ງບໍ່ນຳສະເໜີເຂົ້າໃນເອກະສານ ລາຍງານການເງິນສັງລວມກິດຈະການ.

24. ພາກສ່ວນທີ່ກ່ຽວຂ້ອງ

ນິຕິບຸກຄົນ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ພາຍໃຕ້ການຄວບຄຸມຂອງກຸ່ມບໍລິສັດ ລວມເຖິງການລົງທຶນໃນ ນິຕິບຸກຄົນ ແລະ ບຸກຄົນ ຫຼື ນິຕິບຸກຄົນ ມີອິດທິພົນຫຼາຍຕໍ່ກັບກຸ່ມບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງກຸ່ມບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງ ແມ່ນພິຈາລະນາເຖິງສາຍສຳພັນທີ່ແທ້ຈິງ, ບໍ່ໄດ້ພິຈາ ລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ລາຍການທີ່ສຳຄັນລຸ່ມນີ້ແມ່ນມີການພົວພັນກັບພາກສ່ວນທີ່ກ່ຽວຂ້ອງ:

24.1 ການຂາຍສິນຄ້າ ແລະ ບໍລິການ

	2020 ກີບ	2019 ກີບ
ຂາຍສິນຄ້າໃຫ້ແກ່:		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ		
ນ້ຳມັນເຊື້ອໄຟ	231,618,046,503	267,662,374,359
ຂາຍບໍລິການໃຫ້ແກ່:		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ		
ລາຍຮັບດອກເບ້ຍ	1,066,032,204	1,973,097,184
ຄ່າເຊົ່າ	2,074,372,797	1,866,452,904
ບໍລິການ ອື່ນໆ	168,294,193	188,550,330
	3,308,699,194	**4,028,100,418**

24. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

24.2 ການຊື້ສິນຄ້າ ແລະ ບໍລິການ

	2020 ກີບ	2019 ກີບ
ຊື້ບໍລິການຈາກ:		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ		
ລາຍຈ່າຍການເງິນ	28,080,551,342	24,100,134,298
ລາຍຈ່າຍຄ່າຂົນສົ່ງ	11,849,032,511	16,558,771,207
ລາຍຈ່າຍອື່ນໆ	1,498,420,884	1,767,331,950
	41,428,004,737	**42,426,237,455**

24.3 ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ / ຊື້ສິນຄ້າ / ບໍລິການ

	2020 ກີບ	2019 ກີບ
ໜີ້ຕ້ອງຮັບຈາກ:		
ໜີ້ຕ້ອງຮັບການຄ້າ		
ໜີ້ຕ້ອງຮັບອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 6)	16,563,640,168	13,258,851,920
	16,563,640,168	**13,258,851,920**
ຊັບສິນໝຸນວຽນອື່ນໆ		
ຜູ້ບໍລິຫານ (ບົດອະທິບາຍຂໍ້ 8)		
ໜີ້ຕ້ອງຮັບອື່ນໆ ຈາກສ່ວນເກີນມູນຄ່າຮຸ້ນ	22,497,682,340	22,497,682,340
ໜີ້ຕ້ອງຮັບອື່ນໆ ຈາກການຂາຍພາຫະນະ	16,085,642,483	16,085,642,483
ເງິນລ່ວງໜ້າ ຈາກຜູ້ບໍລິຫານ	8,362,743,793	2,000,000,000
	46,946,068,616	**40,583,324,823**
ພາກສ່ວນທີ່ກ່ຽວຂ້ອງ ອື່ນໆ (ບົດອະທິບາຍຂໍ້ 8)		
ໜີ້ຕ້ອງຮັບ ດອກເບ້ຍ	14,927,099,558	13,861,067,354
ເງິນລ່ວງໜ້າ ໃຫ້ພາກສ່ວນທີ່ກ່ຽວຂ້ອງ	14,642,026,686	9,224,341,291
ໜີ້ຕ້ອງຮັບອື່ນໆ ຈາກການບໍລິການຄ່າເຊົ່າ	11,333,423,076	10,197,928,549
	40,902,549,950	**33,283,337,194**
	87,848,618,566	**73,866,662,017**
ຊັບສິນບໍ່ໝຸນວຽນອື່ນໆ		
ຜູ້ບໍລິຫານ (ບົດອະທິບາຍຂໍ້ 12)		
ຊຳລະລ່ວງໜ້າຄ່າເຊົ່າທີ່ດິນ	34,419,839,505	34,419,839,505
	34,419,839,505	**34,419,839,505**
ໜີ້ຕ້ອງຮັບທັງໝົດ	**138,832,098,239**	**121,545,353,442**

24. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

24.3 ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ / ຊື້ສິນຄ້າ / ບໍລິການ (ຕໍ່)

	2020 ກີບ	2019 ກີບ
ໜີ້ຕ້ອງສົ່ງໃຫ້:		
ໜີ້ຕ້ອງສົ່ງການຄ້າ		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ (ບົດອະທິບາຍຂໍ້ 13)	12,779,938,583	6,984,385,308
	12,779,938,583	**6,984,385,308**
ໜີ້ສິນໝຸນວຽນອື່ນໆ		
ຜູ້ບໍລິຫານ (ບົດອະທິບາຍຂໍ້ 16)		
ເງິນລ່ວງໜ້າຈາກຜູ້ບໍລິຫານ	526,285,059	3,622,653,284
	526,285,059	**3,622,653,284**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ (ບົດອະທິບາຍຂໍ້ 16)		
ດອກເບ້ຍຄ້າງຈ່າຍ	20,627,434,345	643,670,958
ລາຍຈ່າຍຄ້າງຈ່າຍ	456,671,499	-
ຮັບລ່ວງໜ້າຈາກພາກສ່ວນທີ່ກ່ຽວຂ້ອງ	-	8,717,498,687
	21,084,105,844	**9,361,169,645**
	21,610,390,903	**12,983,822,929**
ໜີ້ຕ້ອງສົ່ງທັງໝົດ	**34,390,329,486**	**19,968,208,237**

24. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

24.4 ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ

	2020 ກີບ	2019 ກີບ
ວັນທີ 1 ມັງກອນ	326,255,600,000	257,920,740,000
ເງິນກູ້ຢືມ ຮັບພາຍໃນປີ	60,746,045,421	558,201,182,000
ເງິນກູ້ຢືມ ໄດ້ຮັບຊຳລະຄືນພາຍໃນປີ	(45,896,532,000)	(515,360,265,000)
ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ	26,673,904,000	25,493,943,000
ວັນທີ 31 ທັນວາ	**367,779,017,421**	**326,255,600,000**

ເງິນໃຫ້ກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ ທີ່ມີໄລຍະເວລາຊຳລະຄືນສະເພາະເຈາະຈົງ ແລະ ມີອັດຕາດອກເບ້ຍ 8 % (2019: 8%) ຕໍ່ປີ (ບົດອະທິບາຍຂໍ້ 15).

24.5 ເງິນໃຫ້ກູ້ຢືມແກ່ພາກສ່ວນທີ່ກ່ຽວຂ້ອງ

	2020 ກີບ	2019 ກີບ
ວັນທີ 1 ມັງກອນ	34,433,275,626	36,406,683,271
ເງິນໃຫ້ກູ້ຢືມຈ່າຍ ພາຍໃນປີ	5,339,105,284	1,305,862,565
ເງິນໃຫ້ກູ້ຢືມຮັບ ພາຍໃນປີ	(744,273,200)	(3,417,940,000)
ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ	510,400,000	138,669,790
ວັນທີ 31 ທັນວາ	**39,538,507,710**	**34,433,275,626**

24.6 ຄ່າຕອບແທນຂອງຜູ້ບໍລິຫານຫຼັກ

ຄ່າຕອບແທນຈ່າຍໃຫ້ຜູ້ບໍລິຫາຫຼັກມີດັ່ງລຸ່ມນີ້:

	2020 ລ້ານກີບ	2019 ລ້ານກີບ
ເງິນເດືອນ ແລະ ອື່ນໆ	2,418	2,541

25. ພາລະຜູກພັນ

ກ) ພາລະຜູກພັນລາຍຈ່າຍທຶນ

ໃນວັນທີ 31 ທັນວາ 2020 ກຸ່ມບໍລິສັດ ມີພາລະຜູກພັນໃນການກໍ່ສ້າງ ສະຖານີບໍລິການນ້ຳມັນ ຈຳນວນ 1,192 ລ້ານກີບ.

ຂ) ພາລະຜູກພັນສັນຍາເຊົ່າ ທີ່ທາງກຸ່ມບໍລິສັດເປັນຜູ້ເຊົ່າ

ກຸ່ມບໍລິສັດເຊົ່າທີ່ດິນ ພາຍໃຕ້ສັນຍາເຊົ່າໃນການດຳເນີນງານ ທີ່ບໍ່ສາມາດຍົກເລີກໄດ້.

ຈຳນວນເງິນທີ່ຕ້ອງຊຳລະພາຍໃຕ້ສັນຍາເຊົ່າໃນການດຳເນີນງານ ທີ່ບໍ່ສາມາດຍົກເລີກໄດ້ ມີດັ່ງນີ້:

	2020 ກີບ	2019 ກີບ
ຕ່ຳກວ່າ 1 ປີ	420,000,000	16,521,767,840
ເກີນ 1 ປີ ແຕ່ ບໍ່ເກີນ 5 ປີ	6,733,950,000	14,369,255,308
ເກີນ 5 ປີ	27,095,227,673	38,904,540,379
	34,213,177,673	**69,795,563,527**

ຄ) ພາລະຜູກພັນສັນຍາເຊົ່າ ທີ່ທາງກຸ່ມບໍລິສັດເປັນຜູ້ໃຫ້ເຊົ່າ

ກຸ່ມບໍລິສັດ ໄດ້ໃຫ້ເຊົ່າ ສະຖານີບໍ້ນ້ຳມັນ ແລະ ຫ້ອງການ ພາຍໃຕ້ ສັນຍາເຊົ່າໃນການດຳເນີນງານ. ໜີ້ຕ້ອງຮັບຄ່າເຊົ່າໃນ ອະນາຄົດຂັ້ນຕ່ຳ ໃນວັນທີ 31 ທັນວາ ພາຍໃຕ້ ສັນຍາເຊົ່າໃນການດຳເນີນງານ ທີ່ບໍ່ສາມາດຍົກເລີກໄດ້ ມີດັ່ງນີ້:

	2020 ກີບ	2019 ກີບ
ຕ່ຳກວ່າ 1 ປີ	1,628,748,000	3,447,424,000
ເກີນ 1 ປີ ແຕ່ ບໍ່ເກີນ 5 ປີ	6,339,792,000	13,680,163,000
ເກີນ 5 ປີ	5,073,5990,100	7,012,111,600
	13,042,130,100	**24,139,698,600**

26. ເຫດການທີ່ເກີດຂຶ້ນຫລັງວັນທີໃນໃບສະຫລຸບຊັບສິນສິ້ນປີ

ຫຼັງຈາກວັນທີລາຍງານ, ກຸ່ມບໍລິສັດໄດ້ຮັບຈົດ ໝາຍຈາກເຈົ້າໜ້າທີ່ຈາກໜ່ວຍງານທີ່ກ່ຽວຂ້ອງກ່ຽວກັບການປ່ຽນແປງນະໂຍບາຍການ ບັນຊີ ກຳໄລ/ຂາດທຶນຈາກອັດຕາແລກປ່ຽນ ທີ່ຍັງບໍ່ເກີດຂຶ້ນຈິງ ຈາກການແປງຄ່າຊັບສິນ ແລະ ໜີ້ສິນ ທີ່ສາມາດແປສະພາບເປັນເງິນໄດ້ ທີ່ເປັນສະກຸນເງິນຕາຕ່າງປະເທດ ແມ່ນໃຊ້ໃນໃບລາຍງານຖານະການເງິນ (ບົດອະທິບາຍຂໍ້ 2.3 ແລະ 3).